ZÚME®
ຊູເມ້

# ຄູ່ມືຊູເມ້

# ສາລະບານ


| | |
|---|---|
| ຍິນດີຕ້ອນຮັບສູ່ການອົບຮົມຊູເມ້ | 3 |
| ວິທີການສຶກສາພຣະຄຳພີ | 4 |
| ໜ່ວຍທີ່ມີໜ້າທີ່ຮັບຜິດຊອບ | 4 |
| ວົງຈອນການອະທິຖານ | 7 |
| ລາຍຊື່ 100 ຄົນ | 9 |
| ເລື່ອງລາວຂອງພຣະເຈົ້າ (ຂ່າວປະເສີດ) | 13 |
| ການຊົງສ້າງເຖິງການພິພາກສາ | 13 |
| ການບັບຕິສະມາ | 15 |
| ຄຳພະຍານ 3 ນາທີ | 17 |
| ພິທີມະຫາສະໜິດ | 18 |
| ການຍ່າງອະທິຖານ | 20 |
| ການອະທິຖານອວຍພອນ B.L.E.S.S | 22 |
| ຮູບແບບໜ່ວຍສ້າງສາວົກ | 23 |
| ວົງຈອນການຮຽນຮູ້ | 25 |
| ໜ່ວຍສ້າງຜູ້ນຳ | 27 |
| ແຜນການສາມເດືອນ | 28 |
| ລາຍການກວດກາການສອນ | 30 |
| ໜ່ວຍພີ່ລ້ຽງໃຫ້ຄຳປຶກສາ | 32 |
| ເຄື່ອງມືຂອງສີ່ຮູບແບບຂອງຜູ້ນຳ | 33 |
| ຄຣິສຕະຈັກລຽບງ່າຍ - ຕາຕະລາງ | 34 |
| ສະແດງລຸ້ນ | 34 |
| ພາກເພີ່ມເຕີມ | 35 |

## ຍິນດີຕ້ອນຮັບສູ່ການອົບຮົມຊູເມ້!

ພວກເຮົາດີໃຈທີ່ທ່ານຢູ່ທີ່ນີ້!
ການຝຶກອົບຮົມຊູເມ້ແມ່ນປະສົບການການຮຽນຮູ້ທີ່ແທ້ຈິງແບບອອນໄລນ໌ທີ່ຖືກອອກແບບມາສໍາລັບໜ່ວຍນ້ອຍໆທີ່ເຊື່ອພຣະເຢຊູເຈົ້າເພື່ອມາຮຽນຮູ້ວິທີການເຊື່ອຟັງພຣະມະຫາບັນຊາແລະສ້າງສາວົກແບບເພີ່ມທະວີຄູນ

## ຮູບແບບຂອງບົດຮຽນ

ການຝຶກອົບຮົມຊູເມ້ປະກອບດ້ວຍບົດຮຽນຂັ້ນພື້ນຖານ 9 ບົດແລະບົດຮຽນຂັ້ນສູງ 1 ບົດ (ໜ່ວຍຂອງທ່ານສາມາດກັບຄືນສູ່ບົດນີ້ຮ່ວມກັນຫຼັງຈາກຮຽນບົດຮຽນຂັ້ນພື້ນຖານຄົບຖ້ວນແລ້ວ) ແຕ່ລະບົດຮຽນໃຊ້ເວລາປະມານ 2 ຊົ່ວໂມງ ເຊິ່ງປະກອບດ້ວຍ

- ຮູບພາບແລະສຽງທີ່ຈະຊ່ວຍໃຫ້ໜ່ວຍຂອງທ່ານເຂົ້າໃຈຫຼັກການພື້ນຖານຂອງການເປັນສາວົກແບບທະວີຄູນ
- ການໂອ້ລົມສົນທະນາເພື່ອຊ່ວຍໃຫ້ສະມາຊິກໃນໜ່ວຍຄິດກ່ຽວກັບສິ່ງທີ່ພວກເຂົາຟັງ
- ແບບຝຶກຫັດງ່າຍດາຍ ເພື່ອຊ່ວຍໃຫ້ໜ່ວຍຂອງທ່ານນໍາເອົາສິ່ງທີ່ພວກເຂົາໄດ້ຮຽນຮູ້ໄປໃຊ້
- ການທ້າທາຍທີ່ຈະຊ່ວຍໃຫ້ໜ່ວຍຂອງທ່ານຮຽນຮູ້ແລະເຕີບໃຫຍ່ຢ່າງຕໍ່ເນື່ອງຕະຫຼອດການຮຽນບົດຮຽນ

## ການເລີ່ມແລະຈົບບົດຮຽນດ້ວຍການອະທິຖານ

ມີຜູ້ເຊື່ອພຣະເຢຊູເຈົ້າຫຼາຍໆຄົນໃນທົ່ວໂລກທີ່ອະທິຖານເພື່ອທ່ານແລະໜ່ວຍຂອງທ່ານ ແລະຍັງສືບຕໍ່ອະທິຖານເພື່ອທ່ານຕໍ່ໄປໃນຂະນະທີ່ທ່ານສຶກສາປຶ້ມຄູ່ມືນີ້ ຂໍໃຫ້ໜ່ວຍຂອງທ່ານອະທິຖານເຊັ່ນກັນ
ກ່ອນທີ່ຈະເລີ່ມຕົ້ນແຕ່ລະບົດຮຽນ ຂໍໃຫ້ມີຄົນໜຶ່ງ (ຫຼືຫຼາຍຄົນ) ໃນໜ່ວຍຂອງທ່ານອະທິຖານຂໍພຣະວິນຍານບໍລິສຸດເຈົ້າຂອງພຣະເຈົ້າກຽມໃຈ ແລະຊົງນໍາໃນການໃຊ້ເວລາຮ່ວມກັນ ຢ່າລືມຂໍຂອບຄຸນພຣະເຈົ້າສໍາລັບໂອກາດທີ່ຈະຮູ້ຈັກແລະຮັກພຣະອົງຫຼາຍຍິ່ງຂຶ້ນນັ້ນເປັນສິ່ງທີ່ພຣະອົງຕ້ອງການໃຫ້ເຮົາທຸກຄົນ!
ໃນຕອນທ້າຍຂອງແຕ່ລະບົດຮຽນ ທ່ານຈະມີໂອກາດທີ່ຈະອະທິຖານໃນໜ່ວຍອີກເທື່ອໜຶ່ງ ຈົ່ງໃຊ້ໂອກາດນີ້ ຂໍພຣະເຈົ້າຊ່ວຍທ່ານເຂົ້າໃຈສິ່ງທີ່ພຣະອົງໄດ້ສອນ ຖືກນໍາໄປປະຍຸກໃຊ້ແລະແບ່ງປັນໃຫ້ກັບຄົນອື່ນ ຢ່າລືມອະທິຖານເພື່ອຄວາມຕ້ອງການສະເພາະຂອງໜ່ວຍຂອງທ່ານອີກ

## ການໂອ້ລົມກັນໃນໜ່ວຍ

ໃນການສຶກສາບົດຮຽນຮ່ວມກັນໃນໜ່ວຍທ່ານຈະມີໂອກາດໂອ້ລົມປຶກສາຫາລືຫຼາຍຄັ້ງ ຖ້າບໍ່ໄດ້ບອກໄວ້ ການສົນທະນາໃນໜ່ວຍຄວນໃຊ້ເວລາປະມານ 10 ນາທີ ຂໍໃຫ້ໜຸນໃຈທຸກຄົນໃຫ້ມີສ່ວນຮ່ວມແລະແບ່ງປັນແລກປ່ຽນຄວາມຄິດແລະທັດສະນະຂອງພວກເຂົາຢ່າລະເລີຍບາງສິ່ງບາງຢ່າງທີ່ພຣະເຈົ້າອາດຈະຢາກເວົ້າຜ່ານຄົນທີ່ຢູ່ໃນໜ່ວຍຂອງທ່ານ

## ກວດກາກັນແລະກັນ

ຕະຫຼອດການຝຶກອົບຮົມນີ້ ໜ່ວຍຂອງທ່ານຈະມີໂອກາດທີ່ຈະກວດກາເຊິ່ງກັນແລະກັນເພື່ອເບິ່ງວ່າ ທ່ານເຊື່ອຟັງແລະແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ແນວໃດແດ່ ຢ່າຂ້າມພາກສ່ວນທີ່ສໍາຄັນຂອງການຝຶກອົບຮົມນີ້ໄປ ແຕ່ຈົ່ງລະວັງຢ່າຕັດສິນຄົນອື່ນ ຂໍໃຫ້ພຣະເຈົ້າປະທານຈິດໃຈທີ່ອ່ອນໂຍນເພື່ອຊ່ວຍຄົນອື່ນໄດ້ເຕີບໃຫຍ່
ທ່ານພ້ອມທີ່ຈະເລີ່ມຫຼືຍັງ? ໄປກັນເລີຍ!

## ບົດຮຽນທີ 1

ໃນບົດຮຽນນີ້ ໜ່ວຍຂອງທ່ານຈະໄດ້ເຫັນພາບລວມຂອງການຝຶກອົບຮົມຂອງຊູເມ້ ໄດ້ຮຽນຮູ້ສອງຫຼັກການພື້ນຖານຂອງການສ້າງສາວົກ ແລະພົບກັບເຄື່ອງມືທີ່ງ່າຍໆສອງຢ່າງສຳລັບການສ້າງສາວົກແບບເພີ່ມທະວີຄູນ

## ວິທີການສຶກສາພຣະຄຳພີ

ໃນຖານະທີ່ເປັນຜູ້ເຊື່ອໃນພຣະເຢຊູເຈົ້າ ພວກເຮົາຄວນອ່ານພຣະຄຳພີທຸກໆມື້ ໜຶ່ງໃນວິທີທີ່ດີແມ່ນອ່ານພຣະຄຳພີຢ່າງໜ້ອຍ 25-30 ບົດຕໍ່ອາທິດ ຈົ່ງຈົດບັນທຶກປະຈຳວັນໂດຍນຳໃຊ້ຫຼັກການຂອງການອ່ານພຣະຄຳພີຂ້າງລຸ່ມນີ້ ການອ່ານຕາມຮູບແບບນີ້ຈະຊ່ວຍໃຫ້ທ່ານເຂົ້າໃຈ ເຊື່ອຟັງແລະແບ່ງປັນຫຼືບອກເລົ່າຕໍ່ໄປໄດ້ດີຍິ່ງຂຶ້ນ

- **ພຣະຄຳພີ**: ຂຽນພຣະຄຳໜຶ່ງຂໍ້ຫຼືຫຼາຍກວ່ານັ້ນທີ່ມີຄວາມໝາຍເປັນພິເສດສຳລັບທ່ານໃນມື້ນີ້
- **ການສັງເກດ**: ຂຽນພຣະຄຳທີ່ທ່ານເລືອກຫຼືຂຽນບັນຫາສຳຄັນ ຈາກພຣະຄຳນັ້ນອີກເທື່ອໜຶ່ງໂດຍໃຊ້ຄຳເວົ້າຂອງທ່ານເອງເພື່ອຊ່ວຍໃຫ້ເຂົ້າໃຈຫຼາຍຂຶ້ນ
- **ການນຳໄປໃຊ້**: ຄິດຕຶກຕອງວ່າການມີຊີວິດທີ່ເຊື່ອຟັງຄ□າສັ່ງໃນພຣະຄຳຂໍ້ນັ້ນຫຼືຕອນນັ້ນໝາຍເຖິງຫຍັງ
- **ການອະທິຖານ**: ຂຽນຄຳອະທິຖານຕໍ່ພຣະເຈົ້າກ່ຽວກັບສິ່ງທີ່ທ່ານໄດ້ຮຽນຮູ້ ແລະທ່ານວາງແຜນທີ່ຈະເຊື່ອຟັງແນວໃດ
- **ການແບ່ງປັນ**: ຖາມພຣະເຈົ້າວ່າພຣະອົງຢາກໃຫ້ທ່ານແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ ຫຼືນຳໄປໃຊ້ກັບໃຜ

ຕໍ່ໄປນີ້ແມ່ນຕົວຢ່າງທີ່ແທ້ຈິງຂອງການອ່ານພຣະຄຳພີຕາມຫຼັກການດັ່ງກ່າວ

**ພຣະຄຳພີ** - ພຣະຜູ້ເປັນເຈົ້າຊົງກ່າວວ່າ "ພຣະເຈົ້າຢາເວກ່າວວ່າ, "ຄວາມຄິດເຮົານັ້ນ ບໍ່ຄືຄວາມຄິດຂອງພວກເຈົ້າ ແລະວິຖີທາງຂອງເຮົານັ້ນກໍແຕກຕ່າງໃດບໍ່ຄືວິຖີທາງຂອງພວກເຈົ້າ.ຟ້າສະຫວັນສູງກວ່າແຜ່ນດິນໂລກສັນໃດວິຖີທາງທັງຄວາມຄິດເຮົາກໍສູງກວ່າສັນນັ້ນ." ເອຊາຢາ 55 : 8-9

**ສັງເກດ** - ໃນຖານະເປັນມະນຸດ ຂ້າພະເຈົ້າມີຄວາມຈຳກັດໃນສິ່ງທີ່ຂ້າພະເຈົ້າຮູ້ແລະວິທີປະຕິບັດ ແຕ່ພຣະເຈົ້າບໍ່ມີຂໍ້ຈຳກັດໃນທຸກໆທາງ ພຣະອົງຊົງເຫັນແລະຮູ້**ທຸກສິ່ງທຸກຢ່າງ** ແລະພຣະອົງສາມາດເຮັດໄດ້**ທຸກຢ່າງ**

**ການນຳໄປໃຊ້** - ເນື່ອງຈາກວ່າພຣະເຈົ້າຮູ້ທຸກສິ່ງທຸກຢ່າງແລະວິທີການຂອງພຣະອົງແມ່ນດີທີ່ສຸດ ຂ້າພະເຈົ້າຈະປະສົບຜົນສຳເລັດຫຼາຍໃນຊີວິດ ຖ້າຂ້າພະເຈົ້າຕິດຕາມພຣະອົງແທນທີ່ຈະໃຊ້ວິທີການຂອງຕົນເອງ

**ອະທິຖານ** - ຂ້າແດ່ພຣະຜູ້ເຈົ້າ ລູກບໍ່ຮູ້ວິທີທີ່ຈະດຳເນີນຊີວິດທີ່ດີທີ່ພຣະອົງຊົງພໍໃຈແລະຊ່ວຍເຫຼືອຄົນອື່ນໄດ້ແນວໃດ ວິທີການຂອງລູກນຳໄປສູ່ຄວາມຜິດພາດ ຄວາມຄິດຂອງລູກນຳໄປສູ່ຄວາມເຈັບປວດ ໂຜດສອນວິທີແລະຄວາມຄິດຂອງພຣະອົງໃຫ້ກັບລູກແທນ ໂຜດໃຫ້ພຣະວິນຍານບໍລິສຸດເຈົ້າຂອງພຣະອົງ
ຊົງນຳລູກໃນການຕິດຕາມພຣະອົງດ້ວຍເທີ້ນ

**ແບ່ງປັນ** - ຂ້ອຍຈະແບ່ງປັນພຣະຄຳຕອນນີ້ແລະນຳໄປໃຊ້ກັບໝູ່ທີ່ຊື່ ຄຳດີ ລາວກຳລັງມີບັນຫາແລະຕ້ອງການຄຳແນະນຳສຳລັບການຕັດສິນໃຈທີ່ສຳຄັນທີ່ລາວປະເຊີນຢູ່

## ໜ່ວຍທີ່ມີໜ້າທີ່ຮັບຜິດຊອບ

ໜ່ວຍທີ່ມີໜ້າທີ່ຮັບຜິດຊອບແມ່ນໜ່ວຍທີ່ປະກອບດ້ວຍສອງຫາສາມຄົນເປັນເພດດຽວກັນ ເປັນຜູ້ຊາຍກັບຊາຍແລະຍິງກັບຍິງ ພວກເຂົາຈະພົບກັນໜຶ່ງຄັ້ງຕໍ່ອາທິດເພື່ອປຶກສາຫາລືແລະຕອບຄຳຖາມທີ່ຈະຊ່ວຍໃຫ້ພວກເຂົາເຫັນວ່າສິ່ງໃດດຳເນີນໄປໄດ້ດ້ວຍດີຫຼືມີຫຍັງທີ່ຄວນປັບປຸງແກ້ໄຂ ພວກເຂົາສາມາດໃຊ້ໂທລະສັບເພື່ອໂອ້ລົມກັນແທນກໍ່ໄດ້ຖ້າຫາກບໍ່ສາມາດພົບກັນ ທຸກຄົນໃນໜ່ວຍຕ້ອງເຂົ້າໃຈວ່າສິ່ງທີ່ເລົ່າສູ່ກັນຟັງນັ້ນແມ່ນເປັນຄວາມລັບ

**ພາກປະຕິບັດ** (45 ນາທີ) - ໃຫ້ແບ່ງເປັນໜ່ວຍສອງຫາສາມຄົນຕາມເພດ ໃຊ້ເວລາ 45 ນາທີຕອບຄຳຖາມເພື່ອເບິ່ງຄວາມຮັບຜິດຊອບລາຍການທີ 2 ຂ້າງລຸ່ມນີ້ ເພາະວ່ານີ້ແມ່ນຄັ້ງທຳອິດແລະທ່ານຍັງບໍ່ເຄີຍຮວມຕົວກັນມາກ່ອນ ດັ່ງນັ້ນໃຫ້ຂ້າມຄຳຖາມທີ່ຖາມກ່ຽວກັບການອ່ານພຣະຄຳພີຄັ້ງທີ່ແລ້ວ ຕົວເລືອກທີ່ດີອີກອັນໜຶ່ງຫຼັງຈາກທີ່ທ່ານໄດ້ເຂົ້າສູ່ການຝຶກອົບຮົມໄປໄລຍະໜຶ່ງແລ້ວແມ່ນລາຍການທີ 1

## ຄຳຖາມເພື່ອເຫັນເຖິງໜ້າທີ່ຮັບຜິດຊອບ – ລາຍການທີ 1

ຈົ່ງອະທິຖານໃຫ້ພວກເຮົາທຸກຄົນເປັນເໝືອນກັບພຣະເຢຊູເຈົ້າ
ທ່ານເປັນແນວໃດແດ່? ຊີວິດແຫ່ງການອະທິຖານຂອງທ່ານເປັນແນວໃດ?
ທ່ານມີບາບທີ່ຈະສາລະພາບບໍ? (ດ້ານຄວາມສຳພັນ, ເພດ, ການເງິນ, ຄວາມຍິ່ງຈອງຫອງ, ຄວາມສັດຊື່, ການເຊື່ອຟັງຜູ້ມີອຳນາດ ແລະອື່ນໆ)
ທ່ານໄດ້ເຊື່ອຟັງສິ່ງທີ່ພຣະເຈົ້າໄດ້ບອກທ່ານໃນຄັ້ງທີ່ຜ່ານມາຫຼືບໍ? ເລົ່າລາຍລະອຽດໃຫ້ຟັງແດ່
ໃນອາທິດທີ່ຜ່ານມາ ທ່ານໄດ້ອະທິຖານເພື່ອ "ຜູ້ບໍ່ເຊື່ອ" ໃນລາຍຊື່ຄວາມສຳພັນຂອງທ່ານຫຼືບໍ່? ທ່ານມີໂອກາດທີ່ຈະແບ່ງປັນກັບເຂົາເຈົ້າບໍ? ບອກເລົ່າລາຍລະອຽດໃຫ້ຟັງແດ່
ໃນອາທິດນີ້ທ່ານຈື່ຈຳພຣະຄຳພີໃໝ່ຫຼືບໍ? ທ່ອງໃຫ້ຟັງແດ່
ໃນອາທິດນີ້ທ່ານໄດ້ອ່ານພຣະຄຳພີຢ່າງໜ້ອຍ 25 ບົດຫຼືບໍ? ພຣະເຈົ້າໄດ້ເວົ້າຫຍັງແດ່ກັບທ່ານໂດຍຜ່ານພຣະຄຳ?
ທ່ານຈະລົງມືເຮັດຫຍັງກັບສິ່ງທີ່ພຣະອົງບອກ?
ໃນອາທິດນີ້ ທ່ານໄດ້ເຂົ້າໄປໃນໜ່ວຍສ້າງສາວົກ ຫຼືບໍ? ເປັນແນວໃດແດ່?
ໃນອາທິດນີ້ ທ່ານໄດ້ສະແດງຕົວຢ່າງບາງຢ່າງຫຼືຊ່ວຍຜູ້ໃດຜູ້ໜຶ່ງເລີ່ມຕົ້ນຕັ້ງໜ່ວຍສ້າງສາວົກ ບໍ່? ເລົ່າໃຫ້ຟັງແດ່
ທ່ານເຫັນວ່າມີຫຍັງທີ່ເປັນອຸປະສັກຕໍ່ການທີ່ທ່ານກ້າວເດີນກັບພຣະຄຣິດເຈົ້າແດ່?
ໃນອາທິດນີ້ ທ່ານໄດ້ມີໂອກາດແບ່ງປັນເລື່ອງຂ່າວປະເສີດບໍ? ເລົ່າລາຍລະອຽດໃຫ້ຟັງແດ່ ໃຊ້ເວລານີ້ຝຶກເລົ່າຄຳພະຍານ 3 ນາທີ ແລະເລົ່າຂ່າວປະເສີດ
ໃນອາທິດຕໍ່ໄປທ່ານຈະເຊື້ອເຊີນໃຜມາເຂົ້າຮ່ວມໜ່ວຍບໍ? ຖ້າໜ່ວຍມີຫຼາຍກວ່າ 4 ຄົນ ໃຫ້ແບ່ງອອກເປັນສອງໜ່ວຍ ປິດທ້າຍດ້ວຍຄຳອະທິຖານກ່ຽວກັບສິ່ງທີ່ໄດ້ລົມກັນ

## ຄຳຖາມເພື່ອເຫັນເຖິງໜ້າທີ່ຮັບຜິດຊອບ – ລາຍການທີ 2

ສິ່ງທີ່ທ່ານໄດ້ຮູ້ແລະເຂົ້າໃຈແນວໃດຈາກການອ່ານພຣະຄຳພີໃນອາທິດທີ່ຜ່ານມາໄດ້ຊ່ວຍປັບປຸງວິທີການຄິດແລະວິທີການດຳເນີນຊີວິດຂອງທ່ານແນວໃດແດ່?
ທ່ານບອກຄົນອື່ນກ່ຽວກັບສິ່ງທີ່ທ່ານໄດ້ຮຽນຮູ້ໃນອາທິດຜ່ານມາໃຫ້ໃຜຟັງແດ່ແລະເຂົາມີທ່າທີໃນການຮັບຟັງແນວໃດ?
ທ່ານໄດ້ເຫັນວ່າພຣະເຈົ້າຊົງກະທຳຫຍັງແດ່?
ໃນອາທິດນີ້ທ່ານໄດ້ເປັນພະຍານຊີວິດເພື່ອສຳແດງຄວາມຍິ່ງໃຫຍ່ຂອງພຣະເຢຊູຄຣິດຜ່ານຄຳເວົ້າຫຼືການກະທຳຂອງທ່ານຫຼືບໍ?
ທ່ານໄດ້ເຫັນຫຼືເບິ່ງຮູບພາບທີ່ມີການກະຕຸ້ນທາງເພດ ຫຼືປ່ອຍໃຫ້ຈິດໃຈຂອງທ່ານມີຄວາມຄິດທາງເພດທີ່ບໍ່ເໝາະສົມຫຼືບໍ?
ທ່ານຮູ້ສຶກວ່າພຣະເຈົ້າເປັນເຈົ້າຂອງໃນການໃຊ້ເງິນຂອງທ່ານຫຼືບໍ?
ທ່ານມີຄວາມໂລບໃນສິ່ງໃດຫຼືບໍ່?
ທ່ານໄດ້ໃຊ້ຄຳເວົ້າຂອງທ່ານເພື່ອເຮັດໃຫ້ຄົນອື່ນເສື່ອມເສຍຊື່ສຽງຫຼືທຳຮ້າຍຈິດໃຈຂອງເຂົາຫຼືບໍ່? ທ່ານບໍ່ຊື່ສັດໃນຄຳເວົ້າແລະການກະທຳຫຼືໄດ້ເວົ້າເກີນຄວາມຈິງຫຼືບໍ?
ທ່ານມີການປະພຶດຫຍັງທີ່ຕິດຈົນເປັນນິດໄສຫຼືບໍ່ (ຄວາມຂີ້ຄ້ານ ຫຼືບໍ່ມີວິໄນ)? ທ່ານຕົກເປັນທາດຂອງການແຕ່ງໂຕ ໝູ່ເພື່ອນ ການເຮັດວຽກຫຼືຊັບສິນຂອງທ່ານບໍ?
ທ່ານບໍ່ໃຫ້ອະໄພຜູ້ໃດຫຼືບໍ?

ທ່ານກຳລັງປະເຊີນກັບຄວາມກັງວົນຢູ່ຫຼືບໍ? ທ່ານກຳລັງຂີ້ຈົ່ມຫຼືມັກໃຈຮ້າຍຫຼືບໍ່? ທ່ານມີໃຈຂອບ
ພຣະຄຸນຢູ່ສະເໝີຫຼືບໍ່?
ທ່ານໃຫ້ກຽດ ເຂົ້າໃຈ ແລະມີໃຈກວ້າງຂວາງໃນສາຍພົວພັນກັບຄົນທີ່ສຳຄັນສຳລັບທ່ານຫຼືບໍ?
ທ່ານປະເຊີນກັບການທົດລອງ ໃນເລື່ອງຄວາມຄິດ ຄຳເວົ້າຫຼືການກະທຳແນວໃດ ແລະທ່ານຈັດການກັບສິ່ງເຫຼົ່ານັ້ນແນວໃດ?
ທ່ານສວຍໂອກາດທີ່ຈະຮັບໃຊ້ແລະເປັນພຣະພອນແກ່ຄົນອື່ນແນວໃດແດ່ ໂດຍສະເພາະກັບຄົນທີ່ເຊື່ອ?
ທ່ານໄດ້ເຫັນຄຳຕອບສຳລັບຄຳອະທິຖານທີ່ເຈາະຈົງຫຼືບໍ?
ເຈົ້າອ່ານພຣະຄຳພີສຳລັບອາທິດນີ້ຄົບຖ້ວນຫຼືບໍ

## ບົດຮຽນທີ່ 02

ໃນບົດຮຽນນີ້ໜ່ວຍຂອງທ່ານຈະຮຽນຮູ້ກ່ຽວກັບຄວາມແຕກຕ່າງລະຫວ່າງຜູ້ຜະລິດແລະຜູ້ຊົມໃຊ້ໃນອານາຈັກຂອງພຣະເຈົ້າ ທ່ານຈະໄດ້ຮູ້ແລະຝຶກນຳໃຊ້ເຄື່ອງມືງ່າຍໆ ສຳລັບການເພີ່ມທະວີຈຳນວນສາວົກອີກສອງຢ່າງອີກດ້ວຍ

## ວົງຈອນການອະທິຖານ

ວົງຈອນການອະທິຖານເປັນເຄື່ອງມືທີ່ງ່າຍດາຍ ສຳລັບການຝຶກອະທິຖານດ້ວຍຕົວທ່ານເອງແລະຍັງສາມາດແນະນຳໃຫ້ຜູ້ເຊື່ອຄົນອື່ນໆໄດ້ລອງໃຊ້ນຳ ວົງຈອນການອະທິຖານນີ້ຈະນຳທ່ານເຂົ້າສູ່ວິທີການທີ່ພຣະຄຳພີສອນການອະທິຖານຜ່ານ 12 ຂັ້ນຕອນ ຂັ້ນຕອນລະ 5 ນາທີ ຫຼັງຈາກເຮັດຕາມວົງມົນນີ້ແລ້ວ ທ່ານຈະໄດ້ອະທິຖານເຖິງໜຶ່ງຊົ່ວໂມງ




**ສັນລະເສີນ:** ເລີ່ມຕົ້ນຊົ່ວໂມງຂອງການອະທິຖານຂອງທ່ານດ້ວຍການສັນລະເສີນພຣະເຈົ້າ ຈົ່ງສັນລະເສີນພຣະອົງສຳລັບສິ່ງທີ່ຢູ່ໃນຫົວໃຈຂອງທ່ານຕອນນີ້ ສັນລະເສີນພຣະອົງສຳລັບສິ່ງທີ່ພຣະອົງໄດ້ເຮັດໃນຊີວິດຂອງທ່ານໃນອາທິດທີ່ຜ່ານມາ ຈົ່ງສັນລະເສີນພຣະອົງທີ່ຊົງດີຕໍ່ຄອບຄົວຂອງທ່ານ

**ລໍຖ້າ:** ໃຊ້ເວລາທີ່ຈະລໍຖ້າພຣະຜູ້ເປັນເຈົ້າ ສະຫງົບ ແລະໃຫ້ພຣະອົງນຳຄວາມຄິດຂອງທ່ານ

**ສາລະພາບບາບ:** ຂໍໃຫ້ພຣະວິນຍານບໍລິສຸດເຈົ້າຊົງສະແດງສິ່ງຕ່າງໆ ໃນຊີວິດຂອງທ່ານທີ່ພຣະເຈົ້າອາດຈະບໍ່ພໍໃຈ ຂໍພຣະອົງຊີ້ໃຫ້ເຫັນ ທັດສະນະທີ່ຜິດພາດ ລວມທັງການກະທຳໃດໆ ທີ່ທ່ານບໍ່ໄດ້ອະທິຖານເພື່ອສາລະພາບບາບ ໃຊ້ເວລານີ້ໃນການສາລະພາບສິ່ງນັ້ນຕໍ່ພຣະຜູ້ເປັນເຈົ້າເພື່ອທ່ານຈະໄດ້ຮັບການຊຳລະໃຫ້ສະອາດ

**ອ່ານພຣະຄຳ:** ຈົ່ງໃຊ້ເວລາອ່ານພຣະຄຳເພງສັນລະເສີນ ພຣະຄຳໃນໝວດຜູ້ປະກາດພຣະຄຳ ແລະຂໍ້ພຣະຄຳພີກ່ຽວກັບການອະທິຖານໃນພຣະສັນຍາໃໝ່

**ອະທິຖານຂໍ:** ຂໍເພື່ອຕົວທ່ານເອງ

**ອະທິຖານອ້ອນວອນ:** ຂໍໃເພື່ອຄົນອື່ນ

**ການອະທິຖານໃນພຣະຄໍາ:** ອະທິຖານໃນພຣະຄໍາ ມີຄໍາອະທິຖານໃນພຣະຄໍາພີລວມທັງເພງສັນລະເສີນຫຼາຍບົດທີ່ເໝາະສົມສໍາລັບການອະທິຖານຕຶກຕອງ

**ຂອບພຣະຄຸນ:** ຂອບພຣະຄຸນອົງພຣະຜູ້ເປັນເຈົ້າສໍາລັບສິ່ງຕ່າງໆ ໃນຊີວິດຂອງທ່ານ ຂອບຄຸນແທນຄອບຄົວ ແລະຄຣິສຕະຈັກຂອງທ່ານ

**ຮ້ອງເພງ:** ຮ້ອງເພງສັນລະເສີນຫຼືເພງນະມັດສະການ

**ຕຶກຕອງ:** ຂໍໃຫ້ພຣະຜູ້ເປັນເຈົ້າກ່າວກັບທ່ານ ກະກຽມປຶ້ມແລະເຈ້ຍໃຫ້ພ້ອມເພື່ອບັນທຶກສິ່ງທີ່ພຣະອົງຈະເວົ້າກັບທ່ານ

**ຟັງ:** ຈົ່ງໃຊ້ເວລາໃນການຮອບຮອມສິ່ງທີ່ທ່ານໄດ້ອ່ານ ສິ່ງທີ່ທ່ານອະທິຖານແລະຄໍາສັບໃນເພງທີ່ທ່ານຮ້ອງ ແລະເບິ່ງວ່າສິ່ງທີ່ອົງພຣະຜູ້ເປັນເຈົ້າຈະບອກຫຍັງກັບທ່ານຈາກສິ່ງເຫຼົ່ານັ້ນ

**ສັນລະເສີນ:** ສັນລະເສີນພຣະເຈົ້າສໍາລັບການໄດ້ໃຊ້ເວລາກັບພຣະອົງ ແລະສິ່ງທີ່ພຣະອົງໄດ້ກ່າວແກ່ທ່ານ ຈົ່ງສັນລະເສີນພຣະອົງໃນພຣະລັກສະນະອັນງົດງາມຂອງພຣະອົງ

**ພາກປະຕິບັດ** (60 ນາທີ) ໃຊ້ເວລາ 60 ນາທີຕໍ່ຈາກນີ້ເພື່ອອະທິຖານຕາມວົງຈອນຂອງການອະທິຖານໄປແຕ່ລະຂັ້ນຕອນ ກໍານົດເວລາທີ່ຈະກັບຄືນມາເຂົ້າຮ່ວມໜ່ວຍອີກເທື່ອໜຶ່ງຈັກ 2 – 3 ນາທີ ເພື່ອໃຫ້ທຸກຄົນຈະໄດ້ຫາບ່ອນທີ່ງຽບເພື່ອອະທິຖານແລະຍ່າງກັບມາຫາໜ່ວຍ

# ລາຍຊື່ 100 ຄົນ

ທ່ານເຄີຍຄິດຫຼືບໍ່ວ່າຄວາມສຳພັນຕ່າງໆ ຂອງທ່ານນັ້ນແມ່ນຄວາມຮັບຜິດຊອບຂອງທ່ານ? ລາຍຊື່ 100 ຄົນເປັນເຄື່ອງມືທີ່ງ່າຍດາຍ ທີ່ຈະຊ່ວຍໃຫ້ທ່ານຮັບຜິດຊອບຕໍ່ຄວາມສຳພັນຕ່າງໆ ໄດ້ຫຼາຍຂຶ້ນ

ພຣະເຈົ້າໄດ້ມອບໃຫ້ພວກເຮົາເປັນສາຍພົວພັນເພື່ອພວກເຮົາຈະໄດ້ "ອອກໄປສ້າງສາວົກ" ຄົນເຫຼົ່ານີ້ແມ່ນຄອບຄົວ ໝູ່ເພື່ອນ ເພື່ອນບ້ານ ເພື່ອນຮ່ວມງານ ແລະໝູ່ເພື່ອນໃນຫ້ອງຮຽນຂອງພວກເຮົາ ບໍ່ວ່າຈະເປັນຄົນທີ່ເຮົາຮູ້ຈັກຕະຫຼອດຊີວິດຫຼືຫາກໍ່ຮູ້ຈັກກັນ ການເບິ່ງແຍງຮັກສາຄົນທີ່ພຣະເຈົ້າປະທານໃຫ້ໃນຊີວິດພວກເຮົາແມ່ນຂັ້ນຕອນທຳອິດທີ່ສຳຄັນໃນການເພີ່ມທະວີຈຳນວນສາວົກ ແລະພວກເຮົາສາມາດເລີ່ມຕົ້ນໄດ້ງ່າຍໆ ໂດຍຂຽນລາຍຊື່ຂອງພວກເຂົາອອກມາ

**ພາກປະຕິບັດ** (30 ນາທີ) – ໃຫ້ທຸກຄົນໃນໜ່ວຍໃຊ້ເວລາ 30 ນາທີໃນການຂຽນລາຍຊື່ແລະສາຍພົວພັນຕ່າງໆຂອງພວກເຂົາໂດຍໃຊ້ຮູບແບບຂ້າງລຸ່ມນີ້ ຂຽນແຖວລະໜຶ່ງຊື່ແລະເຮັດເຄື່ອງໝາຍຕາມສະຖານະທາງວິນຍານວ່າເປັນ "ສາວົກ" (ບຸກຄົນທີ່ທ່ານເຊື່ອວ່າເຂົາໄດ້ເຊື່ອພຣະເຢຊູເຈົ້າແລ້ວ) "ຜູ້ບໍ່ເຊື່ອ" (ຄົນທີ່ທ່ານເຊື່ອວ່າບໍ່ໄດ້ເຊື່ອໃນພຣະເຢຊູເຈົ້າ) ຫຼື "ບໍ່ຮູ້"

ຖ້າໃຜຂຽນລາຍຊື່ບໍ່ຄົບຖ້ວນພາຍໃນເວລາທີ່ກຳນົດໄວ້ ໃຫ້ພວກເຂົາເຮັດຕໍ່ນຳຫຼັງ

**ໝາຍເຫດ** – ຄົນທີ່ຢູ່ໃນໃນ 100 ລາຍຊື່ຂອງທ່ານຄວນເປັນຄົນທີ່ທ່ານສາມາດຕິດຕໍ່ໄດ້ ແລະມີຄວາມສຳພັນໃນປະຈຸບັນ ຫຼືມີສາຍພົວພັນທີ່ຕໍ່ເນື່ອງຍາວນານ

## ລາຍຊື່ 100 ຄົນ

| | | | |
|---|---|---|---|
| 1. ທ້າວ ຄຳຈັນ ແສງສະຫວ່າງວົງ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ■ ບໍ່ຮູ້ |

| | | | |
|---|---|---|---|
| 1. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 2. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 3. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 4. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 5. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 6. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 7. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 8. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 9. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 10. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 11. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 12. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 13. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 14. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 15. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 16. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 17. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 18. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 19. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 20. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 21. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 22. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 23. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 24. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 25. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 26. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 27. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 28. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 29. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 30. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 31. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |

| | | | | | | |
|---|---|---|---|---|---|---|
| 32. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 33. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 34. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 35. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 36. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 37. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 38. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 39. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 40. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 41. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 42. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 43. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 44. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 45. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 46. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 47. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 48. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 49. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 50. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 51. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 52. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 53. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 54. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 55. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 56. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 57. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 58. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 59. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 60. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 61. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 62. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 63. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 64. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |
| 65. | ______ | ☐ ສາວົກ | ☐ | ຜູ້ບໍ່ເຊື່ອ | ☐ | ບໍ່ຮູ້ |

| | | | |
|---|---|---|---|
| 66. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 67. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 68. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 69. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 70. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 71. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 72. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 73. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 74. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 75. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 76. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 77. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 78. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 79. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 80. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 81. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 82. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 83. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 84. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 85. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 86. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 87. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 88. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 89. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 90. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 91. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 92. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 93. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 94. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 95. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 96. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 97. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 98. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 99. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |
| 100. ______ | ☐ ສາວົກ | ☐ ຜູ້ບໍ່ເຊື່ອ | ☐ ບໍ່ຮູ້ |

## ບົດຮຽນທີ 03

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ວ່າຫຼັກການຝ່າຍວິນຍານຂອງພຣະເຈົ້ານັ້ນເປັນແນວໃດ ແລະພຣະເຈົ້າໄດ້ລົງທຶນຫຼາຍກັບຄົນທີ່ມີຄວາມຊື່ສັດໃນສິ່ງທີ່ພວກເຂົາມີຢູ່ແລ້ວແນວໃດ ພວກເຮົາຈະໄດ້ຮູ້ຈັກເຄື່ອງມືສອງຢ່າງໃນການສ້າງສາວົກ ນັ້ນກໍຄື ການເລົ່າເລື່ອງລາວຂອງພຣະເຈົ້າຈາກການຊົງສ້າງໄປເຖິງການພິພາກສາແລະການບັບຕິສະມາ

## ເລື່ອງລາວຂອງພຣະເຈົ້າ (ຂ່າວປະເສີດ)

ພຣະເຢຊູເຈົ້າໄດ້ກ່າວວ່າ - "ແຕ່ເຈົ້າທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດເຈົ້າ ຈະສະເດັດມາເທິງພວກເຈົ້າ ແລະພວກເຈົ້າຈະເປັນພະຍານໃຫ້ແກ່ເຮົາ ໃນນະຄອນເຢຣູຊາເລັມ ຕະຫລອດທົ່ວແຂວງຢູດາຍ ກັບແຂວງຊາມາເຣຍ ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ"

ພຣະເຢຊູເຈົ້າເຊື່ອໝັ້ນໃນຕົວພວກສາວົກຂອງພຣະອົງ ພຣະອົງຊົງໄວ້ວາງໃຈໃຫ້ພວກເຂົາເລົ່າເລື່ອງລາວຂອງພຣະອົງ ຫຼັງຈາກນັ້ນພຣະອົງໄດ້ສົ່ງພວກເຂົາອອກໄປໃນທົ່ວໂລກ ແລະໃນບັດນີ້ ພຣະອົງກຳລັງສົ່ງພວກເຮົາອອກໄປ

ບໍ່ມີ "ວິທີທີ່ດີທີ່ສຸດ" ທີ່ຈະບອກເລື່ອງຂອງພຣະເຈົ້າ (ເອີ້ນອີກຢ່າງໜຶ່ງວ່າຂ່າວປະເສີດ) ເພາະວ່າວິທີທີ່ດີທີ່ສຸດແມ່ນຂຶ້ນກັບວ່າຜູ້ທີ່ທ່ານກຳລັງເວົ້ານຳເປັນໃຜ ສາວົກທຸກຄົນຄວນຝຶກຫັດເລົ່າເລື່ອງລາວຂອງພຣະເຈົ້າຢ່າງຖືກຕ້ອງຕາມພຣະຄຳພີ ແລະສາມາດເຊື່ອມຕໍ່ກັບບຸກຄົນທີ່ທ່ານກຳລັງເວົ້ານຳ

## ເລື່ອງລາວຂອງພຣະເຈົ້າ – ຈາກການຊົງສ້າງເຖິງການພິພາກສາ

ວິທີໜຶ່ງໃນການເລົ່າຂ່າວປະເສີດພຣະເຈົ້າແມ່ນ ການເລົ່າເລື່ອງລາວຂອງພຣະເຈົ້າຕັ້ງແຕ່ການຊົງສ້າງເຖິງການພິພາກສາ ຄື ຕັ້ງແຕ່ຈຸດເລີ່ມຕົ້ນຂອງມະນຸດຈົນເຖິງຍຸກສຸດທ້າຍ

ໃນເວລາທີ່ພວກເຮົາບອກເລື່ອງລາວຂອງພຣະເຈົ້າດ້ວຍວິທີນີ້ ພວກເຮົາສາມາດເຮັດໃຫ້ເປັນເລື່ອງຍາວຫຼືເລື່ອງສັ້ນກໍ່ໄດ້ ຈະເລົ່າແບບລະອຽດຫຼືເລົ່າແບບຫຍໍ້ໆ ກໍ່ໄດ້ ແຕ່ຕ້ອງໄດ້ເຊື່ອມຕໍ່ກັບວັດທະນະທຳຂອງຜູ້ຟັງ
ສະເໝີ

ໃນການເລົ່າເລື່ອງລາວຂອງພຣະເຈົ້າໃຫ້ກັບຜູ້ທີ່ມີວັດທະນະທຳທີ່ແຕກຕ່າງກັນຫຼືຜູ້ທີ່ມີຄວາມຄິດທີ່ແຕກຕ່າງກັນ ທ່ານສາມາດໃຊ້ມືເພື່ອສະແດງທ່າທາງປະກອບການເລົ່າໄດ້ເພື່ອເຮັດໃຫ້ມັນງ່າຍຂຶ້ນ

ນີ້ແມ່ນເລື່ອງຂ່າວປະເສີດຂອງພຣະເຈົ້າ -
"ໃນປະຖົມມະການພຣະເຈົ້າໄດ້ສ້າງໂລກໜ່ວຍນີ້ຂຶ້ນມາແລະທຸກສິ່ງທີ່ຢູ່ໃນໂລກ ພຣະອົງຊົງສ້າງ**ຊາຍຄົນທຳອິດ**ແລະ**ຍິງຄົນທຳອິດ**ຂຶ້ນມາ ພຣະອົງໃຫ້ພວກເຂົາຢູ່ໃນສວນທີ່ງົດງາມ ພຣະອົງຊົງໃຫ້ພວກເຂົາເປັນ**ສ່ວນໜຶ່ງໃນຄອບຄົວ**ຂອງພຣະອົງແລະຊົງມີຄວາມສຳພັນທີ່**ໃກ້ຊິດສະໜິດສະໜົມ**ກັບພວກເຂົາ ພຣະອົງຊົງສ້າງເຂົາທັງສອງເພື່ອໃຫ້**ມີຊີວິດຢູ່ຕະຫຼອດໄປ** ບໍ່ມີສິ່ງທີ່ຮຽກວ່າຄວາມຕາຍ"

"ເຖິງແມ່ນວ່າຈະຢູ່ໃນບ່ອນທີ່ສົມບູນແບບ ແຕ່ມະນຸດຍັງດື້ດ້ານກະບົດຕໍ່ພຣະເຈົ້າແລະໄດ້ນຳເອົາ**ຄວາມບາບ**ແລະ**ຄວາມທຸກຍາກ**ເຂົ້າມາໃນໂລກນີ້ ພຣະເຈົ້າໄດ້**ຂັບໄລ່ມະນຸດ**ອອກຈາກສວນນັ້ນ ຄວາມສຳພັນລະຫວ່າງມະນຸດກັບພຣະເຈົ້າໄດ້**ແຕກຫັກລົງ** ບັດນີ້ມະນຸດຈະຕ້ອງປະເຊີນກັບ**ຄວາມຕາຍ**"

“ຫຼາຍໆຮ້ອຍປີຕໍ່ມາ ພຣະເຈົ້າໄດ້ສົ່ງ**ຜູ້ປະກາດພຣະຄຳ**ຫຼາຍຄົນເຂົ້າມາໃນໂລກນີ້ ພວກເຂົາໄດ້ເຕືອນມະນຸດເລື່ອງຄວາມບາບແລະຍັງໄດ້ບອກເຖິງຄວາມ**ສັດຊື່**ແລະ**ພຣະສັນຍາ**ຂອງພຣະເຈົ້າທີ່ພຣະອົງຈະສົ່ງພຣະຜູ້ຊ່ວຍໃຫ້ພົ້ນເຂົ້າມາໃນໂລກນີ້ ອົງພຣະຜູ້ຊ່ວຍໃຫ້ພົ້ນຈະມາ**ຟື້ນຟູຄວາມສຳພັນ**ອັນແໜ້ນແຟ້ນລະຫວ່າງພຣະເຈົ້າກັບມະນຸດຂຶ້ນມາໃໝ່ ອົງພຣະຜູ້ຊ່ວຍຈະຊ່ວຍມະນຸດໃຫ້ພົ້ນຈາກຄວາມຕາຍ ພຣະຜູ້ຊ່ວຍໃຫ້ພົ້ນຈະປະທານ**ຊີວິດອັນຕະຫຼອດໄປເປັນນິດ**ແລະຢູ່ກັບມະນຸດຕະຫຼອດໄປ”

“ພຣະເຈົ້າຊົງຮັກພວກເຮົາຫຼາຍຈົນເມື່ອເຖິງເວລາອັນເໝາະສົມ ພຣະອົງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກເພື່ອເປັນພຣະຜູ້ຊ່ວຍໃຫ້ພົ້ນ”

“ພຣະເຢຊູເຈົ້າເປັນພຣະບຸດຂອງພຣະເຈົ້າ ພຣະອົງຊົງບັງເກີດໃນໂລກນີ້ຜ່ານທາງຍິງພົມມະຈັນ ພຣະອົງຊົງມີຊີວິດທີ່ສົມບູນແບບ ພຣະອົງບໍ່ເຄີຍເຮັດບາບເລີຍຈັກເທື່ອ ພຣະເຢຊູເຈົ້າໄດ້ສອນເລື່ອງລາວຂອງພຣະເຈົ້າໃຫ້ປະຊາຊົນຟັງ ພຣະອົງໄດ້ເຮັດການອັດສະຈັນຫຼາຍຢ່າງທີ່ສຳແດງໃຫ້ເຫັນລິດອຳນາດອັນຍິ່ງໃຫຍ່ຂອງພຣະອົງ ພຣະອົງຊົງຂັບຜີອອກຫຼາຍຜີ ຊົງຮັກສາຄົນເຈັບຈຳນວນຫຼວງຫຼາຍ ແລະຊົງເຮັດໃຫ້ຄົນຕາບອດເບິ່ງເຫັນຮຸ່ງ ຄົນຫູໜວກໄດ້ຍິນ ຊົງເຮັດໃຫ້ຄົນເປັນເປ້ຍລ່ອຍຍ່າງໄດ້ ພຣະເຢຊູເຈົ້າຊົງເຮັດໃຫ້ຄົນຕາຍເປັນຄືນມາຈາກຕາຍອີກຄັ້ງ"

“ພວກຜູ້ນຳສາດສະໜາຫຼາຍຄົນຮູ້ສຶກວ່າອຳນາດຂອງຕົນຖືກຄຸກຄາມແລະພາກັນອິດສາພຣະເຢຊູເຈົ້າ ພວກເຂົາຈຶ່ງຢາກຂ້າພຣະເຢຊູເຈົ້າຕາຍເສຍ ເນື່ອງຈາກພຣະເຢຊູເຈົ້າບໍ່ເຄີຍເຮັດບາບ ພຣະອົງບໍ່ຈຳເປັນຕ້ອງຕາຍ ແຕ່ພຣະອົງເລືອກທີ່ຈະຕາຍເປັນເຄື່ອງບູຊາເພື່ອພວກເຮົາໝົດທຸກຄົນ ຄວາມຕາຍອັນສຸດແສນເຈັບປວດທໍລະມານຂອງ
ພຣະອົງໄດ້ປົກຄຸມຄວາມບາບທັງຫຼາຍຂອງມວນມະນຸດເສຍຫຼັງຈາກນີ້ພຣະເຢເຈົ້າຊູຊົງຖືກຝັງໄວ້ໃນອຸໂມງ”

“ພຣະເຈົ້າຊົງເຫັນການຍອມເສຍສະຫຼະຂອງພຣະເຢຊູເຈົ້າເປັນເຄື່ອງບູຊາໄຖ່ບາບແລະພຣະອົງຊົງຍອມຮັບສິ່ງນັ້ນ ພຣະເຈົ້າຊົງສະແດງການຍອມຮັບໂດຍການເຮັດໃຫ້ພຣະເຢຊູເຈົ້າເປັນຄືນມາຈາກຄວາມຕາຍໃນວັນທີສາມ”

ຖ້າພວກເຮົາ**ເຊື່ອ**ດ້ວຍໃຈຂອງພວກເຮົາວ່າພຣະເຈົ້າຊົງໃຫ້ພຣະເຢຊູເຈົ້າເປັນຄືນມາຈາກຄວາມຕາຍ ແລະ**ຍອມຮັບ**ວ່າພຣະອົງເປັນພຣະເຈົ້າເປັນຜູ້ປົກຄອງແລະກະສັດຂອງພວກເຮົາ ພວກເຮົາຈະໄດ້ຮັບຄວາມລອດພົ້ນ ໃນຖານະເປັນຜູ້ທີ່ເຊື່ອພວກເຮົາ**ຫັນຫຼັງ**ໃຫ້ກັບເສັ້ນທາງແຫ່ງຄວາມບາບແລະຮັບບັບຕິສະມາໃນພຣະນາມຂອງພຣະເຢຊູເຈົ້າ ໂດຍການ**ຈຸ່ມລົງ**ໃນນ້ຳ ຄື ການຕາຍຈາກຊີວິດເກົ່າ ແລະການ**ຂຶ້ນມາ**ຈາກນ້ຳເໝືອນກັບພຣະເຢຊູເຈົ້າທີ່ເປັນຄືນມາຈາກຄວາມຕາຍເພື່ອມີ**ຊີວິດໃໝ່**ທີ່ຕິດຕາມພຣະອົງ ພຣະເຈົ້າຊົງອະໄພຄວາມບາບທັງສິ້ນຂອງເຮົາ ແລະຊົງສົ່ງ**ພຣະວິນຍານບໍລິສຸດເຈົ້າ**ໃຫ້ຢູ່ພາຍໃນພວກເຮົາເພື່ອຊ່ວຍເຮົາໃຫ້ຕິດຕາມພຣະເຈົ້າ ແລະນຳພວກເຮົາໄປກັບສູ່ຄອບຄົວອີກເທື່ອໜຶ່ງ

“ຫຼັງຈາກທີ່ພຣະເຢຊູເຈົ້າເປັນຄືນມາຈາກຕາຍແລ້ວ ພຣະອົງກໍຊົງໃຊ້ເວລາຢູ່ໃນໂລກນີ້ 40 ມື້ ພຣະເຢຊູເຈົ້າໄດ້ຊົງສັ່ງສອນສາວົກຂອງພຣະອົງໃຫ້ອອກໄປທຸກຫົນແຫ່ງ ປະກາດຂ່າວປະເສີດເລື່ອງຄວາມພົ້ນຂອງພຣະອົງໃຫ້ແກ່ທຸກຄົນທົ່ວໂລກ”

“ພຣະເຢຊູເຈົ້າກ່າວວ່າ ‘ເຫດສະນັ້ນ ພວກເຈົ້າຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ພວກເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍຣິສຸດເຈົ້າ ສັ່ງສອນພວກເຂົາໃຫ້ຖືຮັກສາທຸກໆສິ່ງທີ່ເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫຼະ ເຮົາຢູ່ກັບເຈົ້າທັງຫລາຍທຸກໆວັນຈົນສິ້ນໂລກນີ້’ ຫຼັງຈາກນັ້ນພຣະເຢຊູເຈົ້າກໍຖືກຮັບຂຶ້ນໄປສູ່ສະຫວັນຕໍ່ໜ້າຕໍ່ຕາຂອງພວກເຂົາ

“ໃນມື້ໜຶ່ງ ພຣະເຢຊູເຈົ້າຈະ**ກັບມາອີກ**ໃນແບບດຽວກັນນີ້ ພຣະອົງຈະ**ລົງໂທດ**ບັນດາຜູ້ທີ່ບໍ່ຮັກແລະບໍ່ເຊື່ອຟັງພຣະອົງ**ຕະຫຼອດນິລັນດອນ** ພຣະອົງຈະ**ຊົງມາຮັບ**ແລະ**ໃຫ້ລາງວັນ**ແກ່ບັນດາຜູ້ທີ່ຮັກແລະເຊື່ອຟັງພຣະອົງ**ຕະຫຼອດນິລັນດອນ** ພວກເຮົາມີຊີວິດອັນຕະຫຼອດໄປເປັນນິດຢູ່ກັບພຣະອົງໃນຟ້າສະຫວັນແລະເທິງໂລກໃໝ່ແຜ່ນດິນໃໝ່”

"ຂ້າພຣະເຈົ້າໄດ້**ເຊື່ອ**ແລະ**ຍອມຮັບ**ວ່າພຣະເຢຊູເຈົ້າໄດ້ຕາຍເພື່ອບາບຂອງຂ້າພຣະເຈົ້າແລ້ວ ພຣະອົງໄດ້ຊໍາລະຂ້າພຣະເຈົ້າໃຫ້ສະອາດແລະຮື້ຟື້ນຄວາມສໍາພັນໃຫ້ຂ້າພຣະເຈົ້າໄດ້ກາຍເປັນສ່ວນໜຶ່ງໃນຄອບຄົວຂອງພຣະເຈົ້າ ພຣະອົງຊົງຮັກຂ້າພຣະເຈົ້າແລະຂ້າພຣະເຈົ້າກໍຮັກພຣະອົງແລະຈະຢູ່ກັບພຣະອົງຕະຫຼອດໄປເປັນນິດໃນອານາຈັກຂອງພຣະອົງ"

"ພຣະເຈົ້າຊົງຮັກທ່ານແລະປາດຖະໜາໃຫ້ທ່ານໄດ້ຮັບຂອງຂວັນນີ້ເຊັ່ນກັນ ທ່ານຕ້ອງການຮັບສິ່ງນີ້ດຽວນີ້ຫຼືບໍ່?"

**ປະຕິບັດຕົວຈິງ** (45 ນາທີ) – ແບ່ງເປັນໜ່ວຍໜ່ວຍລະສອງຫຼືສາມຄົນແລະໃຊ້ເວລາ 45 ນາທີຕໍ່ຈາກນີ້ຝຶກເລົ່າເລື່ອງລາວຂອງພຣະເຈົ້າ ຈົ່ງເລືອກເອົາ 5 ຄົນຈາກລາຍຊື່ 100 ຄົນຂອງທ່ານທີ່ "ຜູ້ບໍ່ເຊື່ອ" ຫຼື "ບໍ່ຮູ້" ໃຫ້ໜຶ່ງຄົນໃນໜ່ວຍສົມມຸດວ່າເປັນໜຶ່ງໃນຫ້າຄົນ ນັ້ນແລະລອງຝຶກເລົ່າເລື່ອງລາວຂອງພຣະເຈົ້າໃນແບບທີ່ທ່ານຄິດວ່າ ເໝາະສົມກັບຄົນຜູ້ນັ້ນ

ທ່ານສາມາດນໍາໃຊ້ເລື່ອງລາວການຊົງສ້າງຈົນເຖິງການພິພາກສາ ຫຼືວິທີອື່ນໆ ທີ່ທ່ານຄິດວ່າໜ້າຈະໄດ້ຜົນດີກັບຜູ້ຟັງຂອງທ່ານ ຫຼັງຈາກທີ່ທ່ານໄດ້ຝຶກຈົບແລ້ວກໍ່ໃຫ້ປ່ຽນໜ້າທີ່ກັນ ສົມມຸດວ່າຕົນເອງເປັນໜຶ່ງໃນຫ້າຄົນຈາກບັນຊີລາຍຊື່ຂອງໝູ່ເພື່ອນ ເມື່ອທ່ານໄດ້ຝຶກຮຽບຮ້ອຍແລ້ວທ່ານກໍ່ພ້ອມທີ່ຈະເລົ່າເລື່ອງລາວຂອງພຣະເຈົ້າໄດ້

## ການບັບຕິສະມາ

"ພຣະເຢຊູເຈົ້າກ່າວວ່າ – "ພວກເຈົ້າຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ພວກເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍຣິສຸດເຈົ້າ"

ບັບຕິສະມາ – ຫຼືບັບຕິສະໂຕໃນພາສາເດີມໝາຍເຖິງ ການປຸກຫຼືຈຸ່ມລົງໄປ ເໝືອນກັບທ່ານຍ້ອມຜ້າແລະຈຸ່ມມັນລົງໃນສີນັ້ນ ເມື່ອຈັບຂຶ້ນມາຜ້າກໍປ່ຽນເປັນສີໃໝ່ ການຮັບບັບຕິສະມາຄືພາບທີ່ເຮັດໃຫ້ເຮົາເຫັນເຖິງຊີວິດ
ໃໝ່ຊີວິດທີ່ເປັນແບບພຣະລັກສະນະຂອງພຣະເຢຊູເຈົ້າ ເຊິ່ງຖືກປ່ຽນໃຫ້ເຊື່ອຟັງພຣະເຈົ້າ ນີ້ຄືພາບຂອງການຕາຍຕໍ່ບາບຂອງເຮົາເໝືອນກັບທີ່ພຣະເຢຊູເຈົ້າສິ້ນພຣະຊົນເພື່ອບາບຂອງເຮົາ ເປັນການຝັງການດໍາເນີນຊີວິດເກົ່າຂອງເຮົາເຊັ່ນດຽວກັບທີ່ພຣະເຢຊູເຈົ້າຖືກຝັງ ແລ້ວມີຊີວິດໃໝ່ໃນພຣະຄຣິດເຊັ່ນດຽວກັບທີ່ພຣະເຢຊູເຈົ້າເປັນຄືນມາຈາກຄວາມຕາຍແລະຍັງມີຊີວິດຢູ່ໃນເວລານີ້

ຖ້າຫາກທ່ານຍັງບໍ່ເຄີຍໃຫ້ພິທີບັບຕິສະມາໃຫ້ໃຜມາກ່ອນ ສິ່ງນີ້ອາດເບິ່ງຄືວ່າເປັນຕາຢ້ານ ແຕ່ບໍ່ຄວນເປັນເຊັ່ນນັ້ນ ນີ້ຄືຂັ້ນຕອນງ່າຍໆ:

1. ໃຫ້ທ່ານເລີ່ມຕົ້ນດ້ວຍການຫາແຫຼ່ງນໍ້າໃນລະດັບທີ່ຍືນໄດ້ແລະເລິກພຽງພໍທີ່ຈະດໍາຫົວລົງໄປໄດ້ ອາດຈະເປັນໜອງນໍ້າ ແມ່ນໍ້າ ຫຼືທະເລ ມັນອາດຈະເປັນອ່າງອາບນໍ້າ ຫຼືອັນໃດອັນໜຶ່ງທີ່ມີນໍ້າຫຼາຍພໍ

2. ແລ້ວໃຫ້ຜູ້ເຊື່ອຈັບມືຂ້າງໜຶ່ງຂອງທ່ານ ແລະໃຊ້ມືອີກຂ້າງໜຶ່ງຂອງທ່ານຊູຫຼັງລາວໄວ້

3. ຫຼັງຈາກນັ້ນໃຫ້ທ່ານຖາມຄໍາຖາມລາວ 2 ຂໍ້ ເພື່ອໃຫ້ລາວແນ່ໃຈໃນການຕັດສິນໃຈຂອງຕົນເອງໃນຄັ້ງນີ້ຄື
"ເຈົ້າເຄີຍຕ້ອນຮັບພຣະເຢຊູຄຣິດເຈົ້າເປັນອົງພຣະຜູ້ເປັນເຈົ້າແລະພຣະຜູ້ຊ່ວຍໃຫ້ພົ້ນຂອງເຈົ້າແລ້ວຫຼືຍັງ?"
"ເຈົ້າຈະເຊື່ອຟັງແລະຮັບໃຊ້ພຣະອົງໃນຖານະອົງເຈົ້ານາຍຂອງເຈົ້າຕະຫຼອດຊີວິດຂອງເຈົ້າຫຼືບໍ່?"

4. ຖ້າຫາກລາວຕອບວ່າ "ແມ່ນແລ້ວ" ທັ້ງສອງຂໍ້ ຈາກນັ້ນໃຫ້ທ່ານເວົ້າດັ່ງນີ້:
"ເນື່ອງຈາກເຈົ້າໄດ້ປະຕິຍານດ້ວຍຄວາມສັດຊື່ໃນອົງພຣະເຢຊູເຈົ້າແລ້ວ ບັດນີ້ຂ້າພຣະເຈົ້າຂໍໃຫ້
ບັບຕິສະມາເຈົ້າໃນພຣະນາມພຣະບິດາ ພຣະບຸດ ແລະພຣະວິນຍານບໍລິສຸດເຈົ້າ"

5. ໃຫ້ທ່ານຊ່ວຍລາວໂດຍການຈຸ່ມໂຕລາວລົງໃນນໍ້າຈົນຖ້ວມໂຕລາວແລະຊ່ວຍຍົກລາວຂຶ້ນມາ

ທ່ານໄດ້ໃຫ້ບັບຕິສະມາຜູ້ເຊື່ອພຣະເຢຊູເຈົ້າຄົນໃໝ່ແລ້ວ – ລາວເປັນປະຊາກອນຄົນໃໝ່ໃນສະຫວັນ – ເປັນບຸດຄົນໃໝ່ຂອງພຣະເຈົ້າຜູ້ຊົງມີຊີວິດຢູ່ ແລະນີ້ກໍ່ເປັນເວລາແຫ່ງການສະເຫຼີມສະຫຼອງ

**ຫມາຍເຫດ** - ໜ່ວຍຂອງທ່ານຈະເຂົ້າຮ່ວມພິທີມະຫາສະໜິດໃນບົດຮຽນທີ່ 4 ຢ່າລືມກະກຽມອຸປະກອນ (ເຂົ້າຈີ່ແລະນໍ້າອະງຸ່ນ/ນໍ້າໝາກໄມ້) ໃນຄັ້ງຕໍ່ໄປ

## ບົດຮຽນທີ 04

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ວ່າແຜນຂອງພຣະເຈົ້າຄືການໃຫ້ສາວົກທຸກຄົນເກີດຜົນຢ່າງທະວີຄູນ! ພວກເຮົາຈະພົບວ່າສາວົກທີ່ຊື່ສັດທີ່ສຸດມາຈາກບ່ອນທີ່ບໍ່ໜ້າເປັນໄປໄດ້ທີ່ສຸດ ແລະພວກເຮົາຈະຮຽນຮູ້ຈັກເຄື່ອງມືທີ່ມີປະໂຫຍດອັນໜຶ່ງເພື່ອໃຊ້ເຊື້ອເຊີນຄົນອື່ນໃຫ້ເຂົ້າມາສູ່ຄອບຄົວຂອງພຣະເຈົ້າ ນັ້ນແມ່ນການເລົ່າເລື່ອງລາວຂອງຕົວເຮົາເອງ

## ຄຳພະຍານ 3 ນາທີ

ພຣະເຢຊູເຈົ້າກ່າວວ່າ "ທ່ານທັງຫຼາຍເປັນພະຍານຂອງສິ່ງເຫຼົ່ານີ້"

ໃນຖານະເປັນຜູ້ເຊື່ອໃນພຣະເຢຊູເຈົ້າ ພວກເຮົາກໍ່ເປັນ "ພະຍານ" ອີກດ້ວຍ "ເປັນພະຍານ" ເຖິງສິ່ງທີ່ເກີດຂຶ້ນທີ່ ພຣະເຢຊູເຈົ້າຊົງເຮັດໃນຊີວິດຂອງພວກເຮົາ ຄຳພະຍານຂອງທ່ານຄືເລື່ອງລາວຄວາມສຳພັນຂອງທ່ານກັບພຣະເຈົ້າ ທຸກຄົນລ້ວນແຕ່ມີເລື່ອງລາວຂອງຕົນເອງນີ້ເປັນໂອກາດທີ່ທ່ານຈະຝຶກເລົ່າເລື່ອງລາວຂອງທ່ານເອງ

ທ່ານສາມາດເລົ່າເລື່ອງລາວຂອງຕົນເອງໄດ້ໃນຫຼາຍວິທີ ແລະນີ້ແມ່ນວິທີຕ່າງໆທີ່ພວກເຮົາເຫັນວ່າມີປະສິດຕິຜົນ:

- **ໃຊ້ຄຳເວົ້າງ່າຍໆ** – ທ່ານສາມາດເລົ່າດ້ວຍຄຳເວົ້າງ່າຍໆວ່າຍ້ອນຫຍັງທ່ານຈຶ່ງຕັດສິນໃຈເລືອກເຊື່ອພຣະເຢຊູເຈົ້າ ວິທີນີ້ໄດ້ຜົນດີຫາກທ່ານເປັນຜູ້ເຊື່ອໃໝ່

- **ກ່ອນແລະຫຼັງ** – ທ່ານສາມາດເລົ່າເລື່ອງ "ກ່ອນ" ແລະ "ຫຼັງ" ທີ່ທ່ານຈະມາຮູ້ຈັກພຣະເຢຊູເຈົ້າ ເຊັ່ນ ຊີວິດທ່ານເປັນແນວໃດກ່ອນມາຮູ້ຈັກພຣະເຢຊູເຈົ້າ ແລະຕອນນີ້ຊີວິດຂອງທ່ານເປັນແນວໃດ ວິທີນີ້ງ່າຍດາຍແຕ່ມີພະລັງ

- **ມີກັບບໍ່ມີ** – ທ່ານສາມາດ ເລົ່າເລື່ອງ "ມີ" ກັບ "ບໍ່ມີ" ກໍ່ໄດ້ຄືຊີວິດຂອງທ່ານເປັນແນວໃດເມື່ອມີພຣະເຢຊູເຈົ້າ ແລະຊີວິດຂອງທ່ານຈະເປັນແນວໃດຫາກ "ບໍ່ມີ" ພຣະອົງ ເລື່ອງລາວຂອງທ່ານໃນຮູບແບບນີ້ໃຊ້ໄດ້ຜົນດີຖ້າຫາກທ່ານເປັນຜູ້ເຊື່ອມາແລ້ວຕັ້ງແຕ່ຍັງນ້ອຍ

ເມື່ອທ່ານກຳລັງເລົ່າເລື່ອງຂອງທ່ານຈະເປັນການຊ່ວຍໄດ້ຫຼາຍເມື່ອຄິດວ່າມັນເປັນໜຶ່ງສ່ວນໃນສາມສ່ວນຂອງຂະບວນການດັ່ງນີ້:

- **ເລື່ອງຂອງພວກເຂົາ** – ຂໍໃຫ້ຄົນທີ່ທ່ານກຳລັງໂອ້ລົມນຳເລົ່າເລື່ອງຊີວິດຝ່າຍຈິດວິນຍານຂອງພວກເຂົາ

- **ເລື່ອງຂອງທ່ານ** – ຕໍ່ມາກໍເລົ່າຄຳພະຍານຂອງທ່ານທີ່ທ່ານປັບປຸງໃຫ້ເໝາະສົມກັບປະສົບການຂອງລາວ

- **ເລື່ອງລາວຂອງພຣະເຈົ້າ** – ສຸດທ້າຍ ເລົ່າເລື່ອງລາວຂອງພຣະເຈົ້າໃນແບບທີ່ເຊື່ອມໂຍງສອດຄ່ອງກັບມຸມມອງ ຄຸນຄ່າ ແລະລຳດັບຄວາມສຳຄັນຂອງພວກເຂົາ

ຄຳພະຍານທີ່ມີປະສິດທິຜົນຂອງທ່ານບໍ່ຈຳເປັນຕ້ອງຫຼວງຫຼາຍຫຼືລົງລາຍລະອຽດຫຼາຍ ຄວາມຈິງແລ້ວການເລົ່າເລື່ອງຂອງທ່ານພາຍໃນເວລາ 3 ນາທີ ຄວນຈະມີເວລາເຫຼືອສຳລັບຄຳຖາມແລະການສົນທະນາທີ່
ຊັດເຈນຍິ່ງຂຶ້ນ

ຖ້າຫາກທ່ານກັງວົນວ່າຈະເລີ່ມຕົ້ນແນວໃດດີ ກໍ່ຂໍໃຫ້ເລົ່າແບບງ່າຍໆ ພຣະເຈົ້າສາມາດໃຊ້ເລື່ອງລາວຂອງທ່ານເພື່ອປ່ຽນແປງຊີວິດໄດ້ ແຕ່ກະລຸນາຈື່ໄວ້ວ່າທ່ານເປັນຄົນໜຶ່ງທີ່ຈະເປັນຄົນເລົ່າເລື່ອງ

**ປະຕິບັດຕົວຈິງ** (45 ນາທີ) – ແບ່ງເປັນໜ່ວຍ ໜ່ວຍລະສອງຫາສາມຄົນແລະໃຊ້ເວລາ 45 ນາທີຕໍ່ຈາກນີ້ຝຶກເລົ່າຄຳພະຍານຂອງທ່ານ ເລືອກ 5 ຄົນຈາກລາຍຊື່ 100 ຄົນ ຂອງທ່ານຄົນທີ່ "ຜູ້ບໍ່ເຊື່ອ" ຫຼື "ບໍ່ຮູ້" ໃຫ້ໜຶ່ງຄົນໃນໜ່ວຍສົມມຸດວ່າເປັນໜຶ່ງໃນຫ້າຄົນນັ້ນ ແລະ ລອງຝຶກເລົ່າຄຳພະຍານຊີວິດຂອງທ່ານໃນແບບທີ່ທ່ານຄິດວ່າ ເໝາະສົມກັບຄົນຜູ້ນັ້ນ

ທ່ານສາມາດໃຊ້ຮູບແບບການເລົ່າເລື່ອງແບບຂ້າງເທິງນີ້ຫຼືວິທີການອື່ນໆ ທີ່ທ່ານຄິດວ່າຈະໃຊ້ໄດ້ຜົນດີກັບຜູ້ຟັງຂອງທ່ານ ຫຼັງຈາກທີ່ທ່ານໄດ້ຝຶກຈົບແລ້ວກໍ່ໃຫ້ປ່ຽນໜ້າທີ່ກັນ ສົມມຸດວ່າຕົນເອງເປັນໜຶ່ງໃນຫ້າຄົນຈາກບັນຊີລາຍຊື່ຂອງໝູ່ເພື່ອນ ເມື່ອທ່ານໄດ້ຝຶກຮຽບຮ້ອຍແລ້ວ ທ່ານຈະສາມາດເລົ່າຄຳພະຍານຊີວິດໄດ້ພາຍໃນ 3 ນາທີ

## ພິທີສິນມະຫາສະໜິດ

ພຣະເຢຊູເຈົ້າກ່າວວ່າ "ເຮົາເປັນເຂົ້າຈີ່ແຫ່ງຊີວິດ ທີ່ໄດ້ລົງມາຈາກສະຫວັນ ຖ້າຜູ້ໃດກິນເຂົ້າຈີ່ນີ້ແລ້ວ ຜູ້ນັ້ນຈະມີຊີວິດນິຣັນດອນ ແຕ່ເຂົ້າຈີ່ທີ່ເຮົາຈະໃຫ້ນັ້ນ ແມ່ນເນື້ອກາຍຂອງເຮົາເອງ ຊຶ່ງເຮົາໃຫ້ເພື່ອວ່າໂລກຈະໄດ້ມີຊີວິດຢູ່."

ພິທີມະຫາສະໜິດຫຼື "ອາຫານຄາບສຸດທ້າຍຂອງພຣະເຢຊູເຈົ້າ" ເປັນວິທີທີ່ເຮົາຈະສະຫຼອງສາຍສຳພັນອັນແໜ້ນແຟ້ນແລະຄວາມສຳພັນທີ່ຕໍ່ເນື່ອງກັບພຣະເຢຊູເຈົ້າ ນີ້ແມ່ນວິທີສະຫຼອງທີ່ງ່າຍດາຍ -

ເມື່ອທ່ານປະຊຸມກັນໃນຖານະຜູ້ເຊື່ອພຣະເຢຊູເຈົ້າ ຂໍໃຫ້ໃຊ້ເວລາອະທິຖານແບບງຽບໆ ຄຶດຕຶກຕອງແລະສາລະພາບບາບຂອງທ່ານແລະເມື່ອພ້ອມແລ້ວໃຫ້ຄົນໜຶ່ງອ່ານພຣະຄຳພີດັ່ງຕໍ່ໄປນີ້ -

> "ດ້ວຍວ່ານີ້ແຫຼະ ແມ່ນສິ່ງທີ່ເຮົາໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ ແລະເຮົາກໍສົ່ງຕໍ່ສິ່ງນັ້ນໃຫ້ແກ່ພວກເຈົ້າ ຄືໃນຄືນທີ່ຢູດາໄດ້ມອບອົງພຣະເຢຊູເຈົ້າໄວ້ນັ້ນ ພຣະອົງໄດ້ຈັບເອົາເຂົ້າຈີ່ມາ. ເມື່ອໂມທະນາຂອບພຣະຄຸນ ແລ້ວກໍຫັກເຂົ້າຈີ່ນັ້ນ ແລະກ່າວວ່າ, "ນີ້ແຫຼະ ແມ່ນກາຍຂອງເຮົາ ຊຶ່ງໃຫ້ສຳລັບພວກເຈົ້າ ຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ." "
>
> 1 ໂກຣິນໂທ 11:23-24

ຈົ່ງຍື່ນເຂົ້າຈີ່ທີ່ທ່ານຕຽມໄວ້ໃຫ້ທຸກຄົນໃນໜ່ວຍແລະກິນ ອ່ານພຣະຄຳພີຕໍ່ -

> "ເມື່ອຮັບປະທານເຂົ້າແລງແລ້ວ ພຣະອົງໄດ້ຊົງຈັບເອົາຈອກດ້ວຍອາການຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ ຄືພັນທະສັນຍາໃໝ່ໂດຍເລືອດຂອງເຮົາ ເມື່ອເຈົ້າດື່ມຈາກຈອກນີ້ເວລາໃດ ຈົ່ງດື່ມເປັນທີ່ລະນຶກເຖິງເຮົາ."
>
> 1 ໂກຣິນໂທ 11:25

ຍື່ນນ້ຳໝາກໄມ້ຫຼືນ້ຳອະງຸ່ນທີ່ທ່ານຕຽມໄວ້ໃຫ້ທຸກຄົນໃນໜ່ວຍແລ້ວດື່ມ ອ່ານພຣະຄຳພີຕໍ່ຈົນຈົບ -

> "ດ້ວຍວ່າ, ທຸກເທື່ອທີ່ພວກເຈົ້າກິນເຂົ້າຈີ່ນີ້ ແລະດື່ມຈາກຈອກນີ້ເວລາໃດ ພວກເຈົ້າກໍປະກາດການຕາຍຂອງ
> ອົງພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະສະເດັດມາ."
>
> 1 ໂກຣິນໂທ 11:26

ປິດທ້າຍດ້ວຍການອະທິຖານຫຼືຮ້ອງເພງ ທ່ານໄດ້ເຂົ້າຮ່ວມຮັບປະທານອາຫານຄາບສຸດທ້າຍກັບພຣະເຢຊູເຈົ້າແລ້ວ ທ່ານເປັນຂອງພຣະອົງແລະພຣະອົງເປັນຂອງທ່ານ

**ພາກປະຕິບັດ** (10 ນາທີ) – ໃຊ້ເວລາ 10 ນາທີຕໍ່ຈາກນີ້ສະຫຼອງພິທີມະຫາສະໜິດຮ່ວມກັນ

## ບົດຮຽນທີ 05

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ວ່າການຍ່າງອະທິຖານເປັນວິທີທີ່ມີອຳນາດທີ່ຈະກະກຽມພື້ນທີ່ໃດໜຶ່ງ ສຳລັບພຣະເຢຊູເຈົ້າແລະພວກເຮົາຈະຮຽນຮູ້ຮູບແບບການອະທິຖານທີ່ງ່າຍດາຍ ແຕ່ມີອຳນາດທີ່ຈະຊ່ວຍໃຫ້ເຮົາໄດ້ພົບ ແລະສ້າງສາວົກໃໝ່ໃນລະຫວ່າງການອະທິຖານນັ້ນ

## ການຍ່າງອະທິຖານ

ພຣະຄຳຂອງພຣະເຈົ້າບອກວ່າພວກເຮົາຄວນຈະ "ອ້ອນວອນ ໄຫ້ວວອນ ທູນຂໍແລະຂອບພຣະຄຸນເພື່ອຄົນ ທັງປວງ ເພື່ອກະສັດທັງຫຼາຍແລະເພື່ອຄົນທັງປວງທີ່ມີຕຳແໜ່ງສູງ ເພື່ອເຮົາທັງຫຼາຍຈະໄດ້ດຳເນີນຊີວິດຢ່າງງຽບໆ ແລະສະຫງົບສຸກ ໃນທາງທຳ ແລະໂດຍສະຫງ່າຜ່າເຜີຍທຸກຢ່າງ ການເຮັດແນວນັ້ນເປັນການດີແລະເປັນທີ່ຊອບພຣະໄທພຣະເຈົ້າ ຜູ້ຊົງໂຜດໃຫ້ພົ້ນຂອງເຮົາ ທັງຫຼາຍ ຜູ້ຊົງມີພຣະປະສົງໃຫ້ຄົນທັງປວງພົ້ນ ແລະໃຫ້ສັງເກດຮູ້ຄວາມຈິງ"

ການຍ່າງອະທິຖານເປັນວິທີການງ່າຍໆ ທີ່ເຮົາຈະເຊື່ອຟັງພຣະບັນຊາຂອງພຣະເຈົ້າເລື່ອງການອະທິຖານເພື່ອຜູ້ອື່ນ ການຍ່າງອະທິຖານມີຄວາມໝາຍ ຄື ການອະທິຖານຕໍ່ພຣະເຈົ້າໃນຂະນະທີ່ກຳລັງຍ່າງໄປບ່ອນຕ່າງໆ

ແທນທີ່ຈະກົ້ມຫົວລົງຫຼັບຕາອະທິຖານ ພວກເຮົາຈະມືນຕາເບິ່ງສິ່ງຕ່າງໆ ຢູ່ອ້ອມຂ້າງເຮົາທີ່ເຮົາຕ້ອງການອະທິຖານ ແລະຖ່ອມໃຈຂອງເຮົາລົງທູນຂໍໃຫ້ພຣະຈົ້າຊົງຊ່ວຍເຫຼືອ

ທ່ານສາມາດຍ່າງອະທິຖານເປັນໜ່ວຍສອງສາມຄົນຫຼືຍ່າງອະທິຖານຄົນດຽວກໍ່ໄດ້

ຖ້າຫາກທ່ານໄປເປັນກຸ່ມຈົ່ງພະຍາຍາມໃຫ້ທຸກຄົນອະທິຖານອອກສຽງ ທັງທູນກັບພຣະເຈົ້າໃນສິ່ງທີ່ທຸກຄົນເຫັນແລະຄວາມຈຳເປັນຕ່າງໆທີ່ພຣະເຈົ້າໃສ່ໄວ້ໃນໃຈຂອງພວກເຂົາ ຫາກທ່ານໄປຄົນດຽວກໍໃຫ້ອະທິຖານມິດງຽບ ຫຼືອະທິຖານອອກສຽງເວລາທີ່ທ່ານເຫັນໃຜໃນລະຫວ່າງທາງ

ມີ 4 ວິທີທີ່ຈະຊ່ວຍທ່ານຮູ້ວ່າຄວນອະທິຖານເພື່ອຫຍັງໃນລະຫວ່າງການຍ່າງອະທິຖານ:

**ການສັງເກດ** - ເຫັນຫຍັງແດ່? ທ່ານເຫັນເຄື່ອງຫຼິ້ນເດັກນ້ອຍໃນເດີ່ນຫຍ້າ ທ່ານອາດຈະອະທິຖານເພື່ອພວກເດັກນ້ອຍ ເພື່ອຄອບຄົວຫຼືໂຮງຮຽນໃນພື້ນທີ່ນັ້ນໄດ້

**ການຫາຂໍ້ມູນ** - ທ່ານຮູ້ຫຍັງແດ່? ຫາກທ່ານໄດ້ອ່ານເລື່ອງລາວຂອງພື້ນທີ່ນັ້ນມາກ່ອນ ທ່ານອາດຈະຮູ້ບາງຢ່າງກ່ຽວກັບຄົນຢູ່ບ່ອນນັ້ນຫຼືຮູ້ວ່າບ່ອນນັ້ນອາດຈະມີບັນຫາອາຊະຍາກຳຫຼື ຄວາມບໍ່ຍຸດຕິທຳບາງຢ່າງ ໃຫ້ອະທິຖານເພື່ອສິ່ງເຫຼົ່ານີ້ແລະຂໍພຣະເຈົ້າກະທຳການ

**ການເປີດເຜີຍຈາກພຣະເຈົ້າ** - ພຣະວິນຍານບໍລິສຸດເຈົ້າອາດຈະແຕະຕ້ອງໃຈທ່ານ ຫຼືນຳພາທ່ານໃຫ້ຄິດເຖິງສິ່ງໃດສິ່ງໜຶ່ງທີ່ກ່ຽວຂ້ອງກັບຄວາມຈຳເປັນສະເພາະເຈາະຈົງໃນຊຸມຊົນນັ້ນ ຈົ່ງຟັງ ແລະອະທິຖານ

**ການອ່ານພຣະຄຳພີ** - ທ່ານອາດຈະອ່ານພຣະຄຳພີເພື່ອເປັນການຕຽມຕົວສຳລັບການຍ່າງອະທິຖານຫຼື ພຣະວິນຍານບໍລິສຸດເຈົ້າອາດຈະໃຫ້ທ່ານຄິດເຖິງພຣະຄຳຕອນໃດຕອນໜຶ່ງໃນລະຫວ່າງທີ່ທ່ານຍ່າງໄປ ຈົ່ງອະທິຖານໃຫ້ພຣະຄຳນັ້ນຈະສົ່ງຜົນດີຕໍ່ປະຊາຊົນໃນພື້ນທີ່ນັ້ນ

ໃນການຍ່າງອະທິຖານທ່ານສາມາດອະທິຖານເຖິງດ້ານຕ່າງໆ 5 ດ້ານພ້ອມກັບເຊິ່ງມີອິດທິພົນຕໍ່ການ
ດຳເນີນຊີວິດໄດ້ແກ່:

**ດ້ານການປົກຄອງ** - ຊອກຫາແລະອະທິຖານເພື່ອໜ່ວຍງານລາດຊະການເຊັ່ນ ສານ ໜ່ວຍງານລັດ ຫຼືຫ້ອງການຕຳຫຼວດ ອະທິຖານເພື່ອ
ການປ້ອງກັນຄວາມຍຸດຕິທຳ ແລະໃຫ້ຜູ້ນຳຂອງພື້ນທີ່ນັ້ນມີສະຕິປັນຍາແລະມີ
ຄຸນນະທຳ

**ດ້ານທຸລະກິດແລະການຄ້າຂາຍ** - ຊອກຫາແລະອະທິຖານເພື່ອສູນກາງການຄ້າຂາຍເຊັ່ນ ເຂດທຸລະກິດ ຫຼືເຂດຕະຫຼາດ ເພື່ອການ
ລົງທຶນທີ່ຈະເປັນໄປດ້ວຍຄວາມຊອບທຳ ແລະການໃຊ້ຊັບພະຍາກອນຕ່າງໆ ຢ່າງ
ຄຸ້ມຄ່າ ອະທິຖານເພື່ອຄວາມຍຸດຕິທຳທາງເສດຖະກິດແລະໂອກາດທາງທຸລະກິດ ອະທິຖານເພື່ອຜູ້ເຮັດ
ທຸລະກິດຈະມີໃຈກວ້າງ ເຫັນແກ່ຜົນປະໂຫຍດຂອງຄົນອື່ນຫຼາຍກວ່າຜົນກຳໄລຂອງຕົນເອງ

**ດ້ານການສຶກສາ** - ຊອກຫາແລະອະທິຖານເພື່ອສະຖານທີ່ການສຶກສາ ເຊັ່ນ ໂຮງຮຽນ ຕຶກບໍລິຫານ ສູນຝຶກວິຊາຊີບ ວິທະຍາໄລແລະ
ມະຫາວິທະຍາໄລໃນພື້ນທີ່ນັ້ນ ອະທິຖານຂໍໃຫ້ມີບຸກຄະລາກອນທາງການສຶກສາທີ່ມີຄຸນນະທຳ ທີ່ສອນຄວາມຈິງເລື່ອງພຣະເຈົ້າ ແລະປົກ
ປ້ອງຄວາມຄິດຈິດໃຈຂອງນັກຮຽນ ອະທິຖານຂໍພຣະເຈົ້າຊົງຊ່ວຍທີ່ຈະໃຫ້ຜູ້ຮຽນຫ່າງໄກຈາກຄຳສອນທີ່ສັບສົນໃນຄວາມຈິງ ອະທິຖານ
ເພື່ອສະຖາບັນເຫຼົ່ານີ້ທີ່ຈະສ້າງນັກຮຽນທີ່ດຳເນີນຊີວິດດ້ວຍສະຕິປັນຍາ ມີຫົວໃຈຂອງການເປັນຜູ້ຮັບໃຊ້ແລະຜູ້ນຳ

**ດ້ານການສື່ສານ** - ຊອກຫາແລະອະທິຖານ ເພື່ອສູນກາງການສື່ສານ ເຊັ່ນ ສະຖານີວິທະຍຸ ສະຖານີໂທລະພາບ ສຳນັກຂ່າວໜັງສືພິມ
ອະທິຖານໃຫ້ເລື່ອງລາວຂອງພຣະເຈົ້າແລະຄຳພະຍານຊີວິດຂອງຜູ້ເຊື່ອພຣະເຈົ້າໄດ້ຮັບການເຜີຍແຜ່ອອກໄປໃນເມືອງນັ້ນແລະທົ່ວໂລກ
ອະທິຖານເພື່ອພຣະຄຳທີ່ຈະໄດ້ຮັບການປະກາດຜ່ານການສື່ສານຂອງພຣະເຈົ້າໄປສູ່ຄົນຈຳນວນຫຼວງຫຼາຍ ແລະຄົນຂອງພຣະເຈົ້າໃນທຸກ
ຫົນທຸກແຫ່ງຈະໄດ້ເຫັນ
ພຣະລາຊະກິດຂອງພຣະອົງ

**ດ້ານຈິດວິນຍານ** - ຊອກຫາແລະອະທິຖານເພື່ອສູນລວມທາງຈິດວິນຍານ ເຊັ່ນ ຄຣິສຕະຈັກ ໂບດອິດສະລາມ ຫຼືວັດ ອະທິຖານ
ເພື່ອຜູ້ສະແຫວງຫາຝ່າຍວິນຍານທີ່ຈະໄດ້ພົບກັບສັນຕິສຸກແລະການເລົ້າໂລມໃຈໃນພຣະເຢຊູເຈົ້າ ແລະບໍ່ຖືກຄຳສອນປອມເຮັດໃຫ້
ຄອນແຄນຫຼືສັບສົນ

**ພາກປະຕິບັດ** (60-90 ນາທີ) – ແບ່ງເປັນໜ່ວຍ ໜ່ວຍລະສອງຫາສາມຄົນແລ້ວເຂົ້າໄປໃນຊຸມຊົນເພື່ອຝຶກການຍ່າງອະທິຖານ ເລືອກ
ສະຖານທີ່ທີ່ສະດວກສຳລັບທ່ານ ບໍ່ວ່າຈະເປັນຢູ່ນອກຈຸດທີ່ທ່ານກຳລັງອົບຮົມໃນຕອນນີ້ ຫຼືທ່ານຈະອະທິຖານແລະວາງແຜນທີ່ຈະເລືອກ
ເອົາພື້ນທີ່ສະເພາະໃດໜຶ່ງ ຈົ່ງອອກໄປຕາມທີ່ພຣະເຈົ້ານຳພາທ່ານແລະໃຊ້ເວລາປະມານ 60-90 ນາທີສຳລັບກິດຈະກຳນີ້

**ໝາຍເຫດ** - ທ່ານອາດຈະຮຽນຮູ້ແລະຝຶກການອະທິຖານອວຍພອນຂ້າງລຸ່ມນີ້ກ່ອນທີ່ທ່ານຈະອອກໄປ

## ການອະທິຖານອວຍພອນ B.L.E.S.S

ສຸດທ້າຍ ທ່ານສາມາດອະທິຖານເພື່ອຄົນທີ່ທ່ານພົບໃນລະຫວ່າງການຍ່າງອະທິຖານຂອງທ່ານໃນຫ້າດ້ານດັ່ງຕໍ່ໄປນີ້:

ໃນຂະນະທີ່ທ່ານຍ່າງແລະອະທິຖານ ໃຫ້ທ່ານຕື່ນໂຕຊອກຫາໂອກາດແລະຟັງພຣະວິນຍານບໍລິສຸດເຈົ້າທີ່ຈະດົນໃຈໃຫ້ທ່ານອະທິຖານສໍາລັບຜູ້ໃດຜູ້ໜຶ່ງຫລືກຸ່ມຄົນທີ່ທ່ານພົບໃນລະຫວ່າງທາງ

ທ່ານອາດຈະບອກພວກເຂົາວ່າ "ພວກເຮົາກໍາລັງອະທິຖານເພື່ອຊຸມຊົນນີ້ ມີຫຍັງທີ່ພວກເຮົາສາມາດອະທິຖານເພື່ອທ່ານເປັນພິເສດແດ່ບໍ່? ຫຼືເວົ້າວ່າ "ຂ້າພຣະເຈົ້າກໍາລັງອະທິຖານເພື່ອພື້ນທີ່ແຖວນີ້ ທ່ານພໍຈະຮູ້ບໍ່ວ່າມີເລື່ອງໃດທີ່ພວກເຮົາຄວນອະທິຖານເພື່ອເປັນພິເສດ? ຫຼັງຈາກຟັງຄໍາຕອບຂອງພວກເຂົາແລ້ວ ທ່ານຍັງສາມາດຖາມກ່ຽວກັບຄວາມຕ້ອງການຂອງພວກເຂົາໄດ້ ຖ້າພວກເຂົາເລົ່າໃຫ້ທ່ານຟັງ ກໍ່ໃຫ້ທ່ານອະທິຖານເພື່ອພວກເຂົາທັນທີ ຖ້າຫາກວ່າພຣະເຈົ້ານໍາພາ ທ່ານຍັງສາມາດອະທິຖານເພື່ອຄວາມຕ້ອງການອື່ນໆ ອີກກໍ່ໄດ້

ທ່ານສາມາດອະທິຖານເພື່ອໃນຫົວຂໍ້ດັ່ງຕໍ່ໄປນີ້ ເຊິ່ງແຕ່ລະຫົວຂໍ້ມາຈາກພາສາອັງກິດທີ່ອ່ານວ່າ “ແບລດສ໌”
ບີ ແອວ ອີ ເອສ໌ ເອສ໌ (B.L.E.S.S) ເຊິ່ງເປັນວິທີຊ່ວຍໃນການຈື່ຈໍາ:

- B - Body [ຮ່າງກາຍ ກ່ຽວກັບສຸຂະພາບ]
- L – Labor [ການເຮັດວຽກງານ ກ່ຽວກັບວຽກງານແລະການເງິນ]
- E – Emotion [ອາລົມ ກ່ຽວກັບການດໍາເນີນຊີວິດທີ່ມີຄຸນນະທໍາ]
- S – Social [ສັງຄົມ ກ່ຽວກັບຄວາມສໍາພັນດ້ານຕ່າງໆ]
- S – Spiritual [ຈິດວິນຍານ ກ່ຽວກັບການຮູ້ຈັກແລະຮັກພຣະເຈົ້າໃຫ້ຫຼາຍຂຶ້ນ]

ໂດຍທົ່ວໄປແລ້ວ ຄົນສ່ວນໃຫຍ່ຈະຮູ້ສຶກຂອບໃຈທີ່ທ່ານຫ່ວງໃຍແລະອະທິຖານເພື່ອພວກເຂົາ

ຖ້າຫາກຄົນທີ່ເຮົາອະທິຖານເພື່ອນັ້ນບໍ່ໄດ້ເປັນຄຣິສຕຽນ ການອະທິຖານຂອງທ່ານອາດຈະເປີດທາງສູ່ການໂອ້ລົມເລື່ອງຝ່າຍວິນຍານ ແລະເປີດໂອກາດໃຫ້ທ່ານໄດ້ເລົ່າເລື່ອງລາວຂອງທ່ານແລະເລື່ອງລາວຂອງພຣະເຈົ້າ ທ່ານສາມາດຊວນພວກເຂົາໃຫ້ມາຮຽນພຣະຄໍາພີນໍາກັນຫຼືສະເໜີໄປສອນພວກເຂົາຢູ່ທີ່ບ້ານ

ຫາກຄົນຜູ້ນັ້ນເປັນຄຣິສຕຽນ ທ່ານສາມາດຊວນເຂົາໃຫ້ມາຮ່ວມໃນການຍ່າງອະທິຖານຫຼືສອນໃຫ້ພວກເຂົາຍ່າງອະທິຖານໂດຍຂັ້ນຕອນງ່າຍໆເຊັ່ນ:ການອະທິຖານເພື່ອສິ່ງຕ່າງໆໃນ 5 ດ້ານໄປພ້ອມ ເຊິ່ງມີອິດທິພົນຕໍ່ການດໍາເນີນຊີວິດຂອງທ່ານຫຼືການອະທິຖານຕາມຫົວຂໍ້ທີ່ກ່າວໄປແລ້ວທີ່ມາຈາກຄໍາວ່າ “ແບລສ໌” (B.L.E.S.S) ເພື່ອຄອບຄົວຂອງພຣະເຈົ້າຈະໄດ້ຂະຫຍາຍອອກໄປ

**ພາກປະຕິບັດ** (15 ນາທີ) – ແບ່ງເປັນໜ່ວຍ ໜ່ວຍລະສອງຫາສາມຄົນແລະໃຊ້ເວລາ 15 ນາທີຕໍ່ຈາກຕອນນີ້ ຝຶກອະທິຖານທັງຫ້າຫົວຂໍ້ ຈົ່ງອະທິຖານເພື່ອຄົນໃດຄົນໜຶ່ງແລະຝຶກວ່າທ່ານຈະສາມາດສອນຄົນອື່ນໃຫ້ເຂົ້າໃຈແລະໃຊ້ການອະທິຖານອວຍພອນນີ້ໄດ້ແນວໃດນໍາ

## ບົດຮຽນທີ 06

ໃນບົດຮຽນນີ້ ເຮົາຈະຮຽນຮູ້ວ່າພຣະເຈົ້າຊົງໃຊ້ຜູ້ເຊື່ອທີ່ມີຄວາມສັດຊື່ ເຖິງແມ່ນວ່າພວກເຂົາຈະເປັນຜູ້ເຊື່ອໃໝ່ ແຕ່ພຣະເຈົ້າຈະຊົງນຳໃຊ້ພວກເຂົາຫຼາຍກວ່າຜູ້ທີ່ມີຄວາມຮູ້ແລະໄດ້ຮັບການຝຶກອົບຮົມມາແຕ່ຈະບໍ່ເຊື່ອຟັງ ແລະພວກເຮົາຈະເຫັນພາບຂອງວິທີການເຂົ້າໜ່ວຍທີ່ຈະຊ່ວຍໃຫ້ສາວົກເພີ່ມທະວີຈຳນວນໄດ້ຢ່າງໄວວາຍິ່ງກວ່າເກົ່າ

## ຮູບແບບໜ່ວຍສ້າງສາວົກ

ພຣະເຢຊູເຈົ້າກ່າວວ່າ – "ດ້ວຍວ່າມີສອງຫຼືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ ເຮົາກໍຢູ່ຖ້າມກາງເຂົາຢູ່ບ່ອນນັ້ນແຫຼະ"

ນີ້ຄືພຣະສັນຍາອັນໜັກແໜ້ນ ແລະເປັນສິ່ງທີ່ຜູ້ເຊື່ອພຣະເຢຊູເຈົ້າທຸກຄົນຄວນໃຊ້ໃຫ້ເກີດປະໂຫຍດ ໃນຂະນະທີ່ທ່ານເຂົ້າປະຊຸມໜ່ວຍທ່ານຄວນຈະໃຊ້ເວລາແນວໃດ?

ໜ່ວຍສ້າງສາວົກແມ່ນການແບ່ງເວລາອອກເປັນສາມຊ່ວງ ເພື່ອຈະໄດ້ຝຶກການເຊື່ອຟັງສິ່ງທີ່ສຳຄັນທີ່ສຸດທີ່ພຣະເຢຊູເຈົ້າໄດ້ບັນຊາໄວ້

ຕໍ່ໄປນີ້ແມ່ນຮູບແບບການເຂົ້າປະຊຸມໜ່ວຍ:

**ເບິ່ງຍ້ອນກັບຫຼັງ** (1/3 ຂອງເວລາທີ່ມີ)

**ຫ່ວງໃຍແລະອະທິຖານ**: ໃຫ້ເວລາແຕ່ລະຄົນໃນໜ່ວຍເພື່ອຂອບໃຈພຣະເຈົ້າສຳລັບສິ່ງຕ່າງໆ ຫຼັງຈາກນັ້ນໃຫ້ແຕ່ລະຄົນເລົ່າເຖິງສິ່ງທີ່ພວກເຂົາກຳລັງຕໍ່ສູ້ຢູ່ ແລ້ວໃຫ້ບຸກຄົນທີ່ຢູ່ທາງຂວາມືຂອງລາວອະທິຖານເພື່ອເລື່ອງທີ່ລາວບອກ ຖ້າມີໃຜກຳລັງປະເຊີນກັບການຕໍ່ສູ້ຢ່າງໜັກ ແລະຕ້ອງການຄວາມຊ່ວຍເຫຼືອເປັນພິເສດ ຂໍໃຫ້ໃຊ້ເວລາຫຼັງຈາກບົດຮຽນກັບຜູ້ນັ້ນ

**ນິມິດ**: ໃຊ້ເວລາຮ້ອງເພງຮ່ວມກັນໂດຍໃຫ້ມີເນື້ອໃນກ່ຽວກັບການຮັກພຣະເຈົ້າແລະຮັກຄົນອື່ນ ບອກເລື່ອງຂອງພຣະເຢຊູເຈົ້າໃຫ້ຄົນອື່ນຟັງ ການສ້າງໜ່ວຍໃໝ່ແລະຊ່ວຍຄົນອື່ນໃຫ້ເຊື່ອຟັງພຣະເຈົ້າຄືກັນກັບທີ່ໜ່ວຍຂອງທ່ານເຮັດ ອາດຈະມີບາງຄົນແບ່ງປັນພຣະຄຳພີທີ່ກ່ຽວຂ້ອງ

**ກວດກາ**: ໃຫ້ຄົນແຕ່ລະຄົນເລົ່າວ່າພວກເຂົາເຈົ້າເຮັດຕາມທີ່ໄດ້ສັນຍາໄວ້ໃນອາທິດທີ່ຜ່ານມາແນວໃດແດ່:

1. ທ່ານໄດ້ເຮັດຕາມສິ່ງທີ່ທ່ານໄດ້ຮຽນຮູ້ແນວໃດແດ່?
2. ທ່ານໄດ້ຝຶກອົບຮົມຫຼືສອນຜູ້ໃດແດ່ໃນສິ່ງທີ່ທ່ານຮຽນຮູ້?
3. ທ່ານໄດ້ເລົ່າເລື່ອງລາວຂອງທ່ານຫຼືເລື່ອງລາວຂອງພຣະເຈົ້າໃຫ້ໃຜຟັງແດ່?

ຖ້າພວກເຂົາລືມທີ່ຈະເຮັດຕາມສັນຍາຫຼືບໍ່ມີໂອກາດທີ່ຈະເຮັດຕາມທີ່ຕັ້ງໃຈໄວ້ ກໍໃຫ້ເອົາຄຳໝັ້ນສັນຍາຈາກຄັ້ງທີ່ແລ້ວມາລວມກັບສັນຍາໃນອາທິດນີ້ ຖ້າບາງຄົນປະຕິເສດບໍ່ເຊື່ອຟັງສິ່ງທີ່ພຣະເຈົ້າໄດ້ບອກພວກເຂົາຢ່າງຊັດເຈນ ກໍໃຫ້ພິຈາລະນາໂດຍນຳໃຊ້ການໃສ່ລະບຽບວິໄນຂອງຄຣິສຕະຈັກ

**ເບິ່ງຂຶ້ນເທິງ** (1/3 ຂອງເວລາທີ່ມີ)

**ການອະທິຖານ**: ເວົ້າລົມກັບພຣະເຈົ້າແບບກັນເອງແລະຫຍໍ້ໆ ຂໍໃຫ້ພຣະອົງຊົງສອນພຣະຄຳຕອນນີ້ໃຫ້ແກ່ທ່ານ

**ອ່ານແລະໂອ້ລົມກັນ**: ອ່ານພຣະຄຳສຳລັບໃນອາທິດນີ້ ສົນທະນາກັນໂດຍນຳໃຊ້ຄຳຖາມດ້ານລຸ່ມນີ້:

1. ທ່ານມັກຫຍັງໃນພຣະຄຳຕອນນີ້?
2. ພຣະຄຳຕອນນີ້ມີສິ່ງໃດທີ່ທ້າຍທາຍທ່ານ ຫຼືທີ່ທ່ານຄິດວ່າເຂົ້າໃຈຍາກ?

ອ່ານພຣະຄຳພີນັ້ນຊ້ຳອີກເທື່ອໜຶ່ງຈາກນັ້ນສົນທະນາຄຳຖາມຕໍ່ໄປນີ້

3. ເຮົາໄດ້ຮຽນຮູ້ຫຍັງແດ່ກ່ຽວກັບຄົນໃນພຣະຄຳຕອນນີ້?
4. ເຮົາໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພຣະເຈົ້າໃນພຣະຄຳຕອນນີ້?

**ເບິ່ງໄປທາງໜ້າ** (1/3 ຂອງເວລາທີ່ມີ)

ເຊື່ອຟັງ ຝຶກຝົນ ແບ່ງປັນ: ໃຊ້ເວລາຢ່າງໜ້ອຍຫ້ານາທີອະທິຖານງຽບໆ ຂໍໃຫ້ທຸກຄົນໃນໜ່ວຍອະທິຖານຂໍພຣະວິນຍານບໍລິສຸດຊົງສຳແດງແກ່ພວກເຂົາເຈົ້າວ່າຈະຕອບຄຳຖາມເຫຼົ່ານີ້ແນວໃດ ຫຼັງຈາກນັ້ນ ໃຫ້ທຸກຄົນຂຽນຄຳໝັ້ນສັນຍາຂອງຕົນໃສ່ເຈ້ຍເພື່ອໃຫ້ທຸກຄົນສາມາດອະທິຖານເພື່ອຜູ້ອື່ນໄດ້ຢ່າງສະເພາະເຈາະຈົງແລະຖືເປັນພາລະໃຈຮ່ວມກັນ ໃນແຕ່ລະອາທິດ ບໍ່ຈຳເປັນຕ້ອງຕອບທຸກຄຳຖາມທີ່ມີ

5. ຂ້ອຍຈະນຳພຣະຄຳຕອນນີ້ໄປປະຍຸກໃຊ້ແລະເຊື່ອຟັງໄດ້ແນວໃດ?
6. ຂ້ອຍຈະສອນຫຼືແບ່ງປັນພຣະຄຳຕອນນີ້ໃຫ້ໃຜຟັງແດ່?

7. ໃນອາທິດນີ້ພຣະເຈົ້າຊົງຕ້ອງການໃຫ້ຂ້ອຍແບ່ງປັນເລື່ອງລາວຂອງຕົນເອງ ຄຳພະຍານ ເລື່ອງລາວຂອງພຣະເຈົ້າຫຼືຂ່າວປະເສີດໃຫ້ໃຜຟັງ?

**ພາກປະຕິບັດ**: ແບ່ງອອກເປັນໜ່ວຍ ໜ່ວຍລະສອງຫຼືສາມຄົນ ໃຫ້ທຸກຄົນຝຶກເຮັດສິ່ງທີ່ໄດ້ສັນຍາໄວ້ໃນຂໍ້ 5, 6 ຫຼື 7 ຕົວຢ່າງ ລອງສົມມຸດວ່າໃນເວລາທີ່ປະເຊີນໜ້າກັບການສົນທະນາທີ່ຍາກຫຼືປະເຊີນກັບການທົດລອງ ຈົ່ງຝຶກສອນພຣະຄຳຕອນທີ່ໄດ້ອ່ານໄປນັ້ນ ຫຼືຝຶກເລົ່າຂ່າວປະເສີດ

**ສົນທະນາກັບພຣະເຈົ້າ**: ທຸກໆຄົນຍັງຢູ່ໃນໜ່ວຍເດີມ ໃຫ້ອະທິຖານເພື່ອແຕ່ລະບຸກຄົນ ຂໍໃຫ້ພຣະເຈົ້າກະກຽມຈິດໃຈຂອງຜູ້ທີ່ພວກເຮົາຈະໄປປະກາດໃຫ້ໃນອາທິດນີ້ ຂໍໃຫ້ພຣະເຈົ້າໃຫ້ທ່ານມີຄວາມເຂັ້ມແຂງແລະ
ສະຕິປັນຍາເພື່ອປະຕິບັດຕາມສິ່ງທີ່ທ່ານໄດ້ສັນຍາໄວ້ ນີ້ແມ່ນພາກສ່ວນສຸດທ້າຍຂອງການເຂົ້າປະຊຸມໜ່ວຍ

ຫຼັງຈາກທີ່ທຸກຄົນໄດ້ຝຶກສຳເລັດແລ້ວ ໃຫ້ຮ່ວມພິທີມະຫາສະໜິດຫຼືກິນເຂົ້າຮ່ວມກັນ

**ໝາຍເຫດ** - ໃນພາກເພີ່ມເຕີມຂອງປຶ້ມຄູ່ມືນີ້ ມີລາຍການຂໍ້ພຣະຄຳພີທີ່ໜ່ວຍສ້າງສາວົກສາມາດເລືອກທີ່ຈະຮຽນໄດ້

## ບົດຮຽນທີ 07

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ກ່ຽວກັບວົງຈອນການຮຽນຮູ້ ໂດຍປຽບທຽບກັບການຮຽນຂີ່ລົດຖີບ ເຊິ່ງເປັນວິທີທີ່ຈະຊ່ວຍເພີ່ມທະວີຈຳນວນສາວົກແລະປ່ຽນພັນທະກິດໃຫ້ກາຍເປັນການຂັບເຄື່ອນ ພວກເຮົາຈະຝຶກໜ່ວຍສ້າງສາວົກໃນບົດນີ້ ແລະຈະໄດ້ຮຽນຮູ້ວ່າການປະຊຸມໜ່ວຍສາມາດສົ່ງຜົນກະທົບຕໍ່ການເພີ່ມທະວີຈຳນວນຂອງທ່ານແນວໃດ

## ວົງຈອນການຮຽນຮູ້ : ຮຽນຂີ່ລົດຖີບ

ການສອນຂີ່ລົດຖີບປະກອບດ້ວຍການວາງແບບຢ່າງ, ຊ່ວຍເຂົາເຮັດ, ເບິ່ງເຂົາເຮັດ ແລະອອກໄປບ່ອນໃໝ່

ອະທິບາຍໄດ້ຕາມຮູບພາບນີ້:




**ການວາງແບບຢ່າງ-** ການເຮັດໃຫ້ເບິ່ງແມ່ນການເຮັດໃຫ້ເຫັນເປັນຕົວຢ່າງ ນີ້ແມ່ນຂັ້ນຕອນທີ່ສັ້ນທີ່ສຸດຂອງການສອນຂີ່ລົດຖີບ ສ່ວນໃຫຍ່ຈະເຮັດພຽງແຕ່ 1 ຄັ້ງກໍ່ພຽງພໍ ການເຮັດເປັນຕົວຢ່າງເຮັດໃຫ້ຜູ້ຮຽນໄດ້ຮຽນຮູ້ວ່າເລື່ອງການປະຕິບັດຫຼືເຄື່ອງມືອັນນັ້ນມີຢູ່ ແລະສະແດງໃຫ້ເຫັນພາບລວມວ່າມັນເປັນແນວໃດ ການເຮັດໃຫ້ເບິ່ງຊ້ຳແລ້ວຊ້ຳອີກ ບໍ່ແມ່ນວິທີທີ່ມີປະສິດທິພາບທີ່ສຸດໃນການຝຶກອົບຮົມຄົນອື່ນ ເນື່ອງຈາກວ່າພວກເຂົາຄວນຈະໄດ້ທົດລອງເຮັດແນວນັ້ນໂດຍຕົວເອງ

ເມື່ອເດັກນ້ອຍຄົນໜຶ່ງໄດ້ເຫັນຄົນອື່ນຂີ່ລົດຖີບ ນັ້ນແຫຼະແມ່ນການ**ວາງແບບຢ່າງ**

**ຊ່ວຍເຂົາເຮັດ** - ການຊ່ວຍເຫຼືອແມ່ນການໃຫ້ຜູ້ຮຽນໄດ້ຝຶກຄວາມຊ່ຽວຊານ ຂັ້ນຕອນນີ້ໃຊ້ເວລາດົນກວ່າການວາງແບບຢ່າງຄົນທີ່ເປັນພີ່ລ້ຽງຈະຕ້ອງມີການ "ຈັບມື" ໃຫ້ແນະນຳ ແລະກະຕືລືລົ້ນໃນການສອນ ພີ່ລ້ຽງບໍ່ຈຳເປັນຕ້ອງໃຫ້ການຊ່ວຍເຫຼືອຈົນກວ່າຜູ້ຮຽນຈະ

ສາມາດເຮັດໄດ້ຢ່າງຄົບຖ້ວນ ພຽງແຕ່ເຮັດໃຫ້ພວກເຂົາເຂົ້າໃຈພື້ນຖານຂອງທັກສະ ຖ້າຫາກພີ່ລ້ຽງຊ່ວຍເຫຼືອດົນເກີນໄປ ຜູ້ຮຽນກໍ່ຈະມີໃຈເພິ່ງພາໂຕພີ່ລ້ຽງແລະບໍ່ສາມາດພັດທະນາຄວາມສາມາດຂອງຕົນຢ່າງເຕັມທີ່ ການຊ່ວຍເຫຼືອຄວນສິ້ນສຸດລົງເມື່ອນັກຮຽນເລີ່ມເຮັດໃຫ້ຄົນອື່ນເຫັນ

ການທີ່ພໍ່/ແມ່ຊ່ວຍຄືງລົດຖີບໃນຂະນະທີ່ລູກກຳລັງສ້າງຄວາມດຸ່ນດ່ຽງໃນການຂີ່ລົດຖີບ ນັ້ນແຫຼະແມ່ນ **ການຊ່ວຍເຂົາເຮັດ**

**ເບິ່ງເຂົາເຮັດ** – ການເຝົ້າເບິ່ງແມ່ນຂັ້ນຕອນທີ່ຍາວທີ່ສຸດ ສ່ວນໃຫຍ່ແມ່ນການຕິດຕໍ່ທາງອ້ອມກັບຜູ້ຮຽນ ເປົ້າໝາຍແມ່ນເພື່ອໃຫ້ນັກຮຽນໄດ້ພັດທະນາທັກສະຈົນຊຳນານ ມັນອາດຈະໃຊ້ເວລາສິບເທົ່າຫຼືດົນກວ່າສອງຂັ້ນຕອນທຳອິດມາລວມກັນ ໃນຂະນະທີ່ຜູ້ຮຽນມີຄວາມກ້າວໜ້າໃນການໃຊ້ທັກສະ ການຕິດຕໍ່ກັບພີ່ລ້ຽງຈະໜ້ອຍກວ່າປົກກະຕິແລະແບບບາງຄັ້ງບາງຄາວເທົ່ານັ້ນ ໃນຂັ້ນຕອນນີ້ຜູ້ຮຽນຈະມີຄວາມຮັບຜິດຊອບຫຼາຍຂຶ້ນແລະຈະເປັນຄົນລົງມືຝຶກຝົນທັກສະຕ່າງໆ ເອງ ໂດຍທົ່ວໄປແລ້ວການສ້າງສາວົກ ຈຸດສິ້ນສຸດຂອງຂັ້ນຕອນນີ້ແມ່ນເມື່ອຜູ້ຮຽນໄດ້ສົ່ງທັກສະຄວາມຮູ້ຂອງເຂົາເຈົ້າໄປເຖິງຄົນລຸ້ນທີສີ່ທີ່ພວກເຂົາເປັນຄູຝຶກສອນໄດ້ຢ່າງປະສົບຜົນສຳເລັດ

ເມື່ອພໍ່/ແມ່ຍອມໃຫ້ລູກຂີ່ລົດຖີບແລະແນ່ໃຈວ່າພວກເຂົາມີທັກສະແລະຄວາມຮູ້ທີ່ສາມາດຂີ່ດ້ວຍຕົນເອງ ນີ້ແມ່ນຊ່ວງຂອງການ**ເບິ່ງເຂົາເຮັດ**

**ອອກໄປບ່ອນໃໝ່**- ການ**ອອກໄປບ່ອນໃໝ່**ເປັນຄືກັນກັບການຮຽນຈົບ ເມື່ອຜູ້ຮຽນສາມາດເຮັດສິ່ງດຽວກັນກັບທີ່ພີ່ລ້ຽງເຮັດໄດ້ ແລະໄດ້ມີການຕິດຕໍ່ພົວພັນກັບແຕ່ລະໄລຍະ ການເບິ່ງແຍງເຊິ່ງກັນແລະກັນແບບພີ່ລ້ຽງໃຫ້ຄຳປຶກສາຈະດຳເນີນຕໍ່ໄປຖ້າຫາກຜູ້ຮຽນແລະພີ່ລ້ຽງຍັງຢູ່ໃນເຄືອຂ່າຍດຽວກັນ

ເມື່ອພໍ່ແມ່ຍອມໃຫ້ລູກຂີ່ລົດຖີບດ້ວຍຕົນເອງໂດຍບໍ່ຕ້ອງເຝົ້າເບິ່ງເຂົາອີກຕໍ່ໄປ ນີ້ແມ່ນຂັ້ນຕອນຂອງການ**ອອກໄປບ່ອນໃໝ່**

## ຝຶກການປະຊຸມໜ່ວຍສ້າງສາວົກ

**ປະຕິບັດຕົວຈິງ** (90 ນາທີ) - ໃຊ້ເວລາ 90 ນາທີຕໍ່ຈາກນີ້ເພື່ອຝຶກການປະຊຸມໜ່ວຍສ້າງສາວົກໃນໜ້າ 19 - 20

- ***ເບິ່ງຍ້ອນກັບ*** - ໃຊ້ບົດຮຽນເລື່ອງ ການທ້າທາຍ ຈາກອາທິດຜ່ານມາເພື່ອຝຶກເລື່ອງ ຄວາມຊື່ສັດ
- ***ເບິ່ງຂຶ້ນເທິງ*** - ອ່ານພຣະຄຳມາຣະໂກ 5:1-20 ຮ່ວມກັນແລະຕອບຄຳຖາມຂໍ້ 1 - 4
- ***ເບິ່ງໄປທາງໜ້າ*** - ໃຊ້ຄຳຖາມ 5, 6 ແລະ 7 ເພື່ອພັດທະນາການເຊື່ອຟັງ ການຝຶກອົບຮົມຄົນອື່ນແລະການແບ່ງປັນ

**ໝາຍເຫດ** - ແຕ່ລະສ່ວນຄວນໃຊ້ເວລາ 1/3 ຂອງເວລາທີ່ມີ (ຫຼື 30 ນາທີ)

## ບົດຮຽນທີ 08

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ວ່າ ພາຍໃນເວລາສັ້ນໆ ຫົວໜ້າໜ່ວຍຈະກະກຽມຜູ້ເຊື່ອເພື່ອໃຫ້ຂຶ້ນມາເປັນຜູ້ນໍາຕະຫຼອດໄປໄດ້ແນວໃດ? ພວກເຮົາຈະຮຽນຮູ້ວ່າພຣະເຢຊູເຈົ້າໄດ້ສອນວ່າຜູ້ນໍາແມ່ນຜູ້ທີ່ຮັບໃຊ້ຄົນອື່ນ ແລະພວກເຮົາຈະໃຊ້ເວລາການຝຶກການປະຊຸມໜ່ວຍສ້າງສາວົກຮ່ວມກັນອີກຄັ້ງ

## ໜ່ວຍສ້າງຜູ້ນໍາ

ໜ່ວຍສ້າງຜູ້ນໍາແມ່ນການປະຊຸມໜ່ວຍສ້າງສາວົກທີ່ມີການກໍານົດໄລຍະເວລາລ່ວງໜ້ານໍາກັນ (ເຊັ່ນດຽວກັນກັບການຝຶກອົບຮົມ 9 ບົດຂອງຊູເມ້) ເປົ້າໝາຍກໍ່ເພື່ອກະກຽມຄົນໜ່ວຍໜຶ່ງໃຫ້ພ້ອມທີ່ຈະອອກໄປແລະສ້າງຕັ້ງໜ່ວຍໃໝ່ຂຶ້ນມາ ຫຼືຈະຕັ້ງໜ່ວຍສ້າງຜູ້ນໍາໜ່ວຍໃໝ່ຂຶ້ນມາ ເມື່ອການຝຶກອົບຮົມນີ້ສິ້ນສຸດລົງ

ວິທີນີ້ສາມາດຖືກນໍາໃຊ້ໃນຫຼາຍສະຖານະການ ບໍ່ວ່າຈະເປັນການໃຊ້ກັບກຸ່ມຄົນທີ່ບໍ່ມີບ່ອນຢູ່ເປັນຫຼັກເປັນແຫຼ່ງເຊັ່ນ ກຸ່ມຄົນທີ່ບໍ່ມີທີ່ຢູ່ອາໃສ ນັກຮຽນນັກສຶກສາ ແລະອື່ນໆ ຫຼືຈະໃຊ້ກັບຄຣິສະຕຽນທີ່ບໍ່ສາມາດຕັ້ງໜ່ວຍປະຈໍາຂຶ້ນມາໄດ້ ພວກເຂົາຄວນໄດ້ຮັບການຝຶກອົບຮົມໃຫ້ສາມາດສ້າງໜ່ວຍໃໝ່ຂອງຕົນເອງໄດ້ ວິທີການນີ້ສາມາດນໍາໃຊ້ໃນສະຖານະການທີ່ມີຫຼາຍຄົນມາເຊື່ອໃນເວລາດຽວກັນ ເຮັດໃຫ້ບໍ່ມີເວລາພຽງພໍຫຼືບໍ່ມີໂອກາດທີ່ຈະຕິດຕາມຜົນໄດ້ຮັບແຕ່ລະຄົນໄດ້ໂດຍໃຊ້ວິທີພຣະພອນທີ່ຍິ່ງໃຫຍ່ທີ່ສຸດຫຼືວິທີການອື່ນໆທີ່ຄ້າຍຄືກັນ

## ຝຶກການປະຊຸມໜ່ວຍສ້າງສາວົກ, ອີກເທື່ອໜຶ່ງ

**ປະຕິບັດຕົວຈິງ**(90 ນາທີ)-ໃຫ້ໝົດທຸກໜ່ວຍໃຊ້ເວລາ 90 ນາທີຝຶກປະຊຸມໜ່ວຍສ້າງສາວົກຈາກໜ້າ 19-20

ປະຕິບັດຕາມຂັ້ນຕອນເຫຼົ່ານີ້:

- ***ເບິ່ງຍ້ອນກັບ*** ໃຊ້ບົດຮຽນເລື່ອງການທ້າທາຍຈາກອາທິດຜ່ານມາເພື່ອຝຶກເລື່ອງຄວາມຊື່ສັດ
- ***ເບິ່ງຂຶ້ນເທິງ*** ອ່ານພຣະຄໍາກິດຈະການ 2:42-47 ຮ່ວມກັນແລະຕອບຄໍາຖາມຂໍ້ 1-4
- ***ເບິ່ງໄປທາງໜ້າ*** ໃຊ້ຄໍາຖາມ 5, 6 ແລະ 7 ເພື່ອພັດທະນາການເຊື່ອຟັງ ການຝຶກອົບຮົມຄົນອື່ນແລະການແບ່ງປັນ

ຕະຫຼອດການຝຶກຝົນນີ້ ໃຫ້ປ່ຽນກັນເປັນຜູ້ນໍາເພື່ອທຸກຄົນຈະມີໂອກາດນໍາ ຈະອະທິຖານ ຫຼືຖາມຄໍາຖາມ ຂໍໃຫ້ໜູນໃຈແລະແນະນໍາເຊິ່ງກັນແລະກັນວ່າສິ່ງໃດທີ່ເຮັດໄດ້ດີແລ້ວ ແລະສິ່ງໃດສາມາດພັດທະນາຂຶ້ນໄດ້ຖ້າຫາກມີການຝຶກຝົນເພີ່ມເຕີມ ສະມາຊິກແຕ່ລະຄົນໃນໜ່ວຍຄວນຈະພັດທະນາໄປສູ່ຂັ້ນຕອນຕໍ່ໄປໄດ້ແນວໃດ

**ໝາຍເຫດ** - ໃຫ້ແຕ່ລະສ່ວນຄວນໃຊ້ເວລາ 1/3 ຂອງເວລາທີ່ມີ (ຫຼືສ່ວນລະ 30 ນາທີ)

## ບົດຮຽນທີ 09

ໃນບົດຮຽນນີ້ ພວກເຮົາຈະຮຽນຮູ້ວ່າຂະບວນການແບບເສັ້ນຊື່ເປັນຂັ້ນຕອນນັ້ນເຮັດໃຫ້ການເຕີບໃຫຍ່ຂະຫຍາຍຕົວຂອງອານາຈັກຂອງພຣະເຈົ້າຢຸດລົງ ແຕ່ແນວຄິດທີ່ບໍ່ລຽງຕາມລຳດັບຈະຊ່ວຍໃຫ້ທ່ານເພີ່ມທະວີຈຳນວນສາວົກໄດ້ ພວກເຮົາຈະໄດ້ພົບວ່າເວລາເປັນສ່ວນທີ່ສຳຄັນຫຼາຍໃນການສ້າງສາວົກແລະພວກເຮົາຈະເລັ່ງຄວາມໄວຂອງພວກເຮົາຫຼືເລັ່ງການຂັບເຄື່ອນໄດ້ແນວໃດ ພວກເຮົາຮຽນຮູ້ວ່າຜູ້ເຊື່ອພຣະເຢຊູເຈົ້າສາມາດເປັນສ່ວນໜຶ່ງຂອງສອງຄຣິສຕະຈັກເພື່ອຊ່ວຍປ່ຽນຄອບຄົວຝ່າຍວິນຍານໃຫ້ກາຍເປັນພຣະກາຍຂອງຜູ້ເຊື່ອທີ່ເຕີບໃຫຍ່ແຜ່ອອກໄປ ສຸດທ້າຍ ພວກເຮົາຈະຮຽນຮູ້ວ່າແຜນການ 3 ເດືອນຈະຊ່ວຍໃຫ້ທ່ານເຫັນຈຸດສົນໃຈທີ່ທ່ານຄວນເນັ້ນໜັກ ແລະຈະຊ່ວຍເພີ່ມປະສິດທິພາບໃນການຂະຫຍາຍຄອບຄົວຂອງພຣະເຈົ້າແບບທະວີຄູນ

## ແຜນການ 3 ເດືອນ

ເຖິງຕອນນີ້ທ່ານກໍ່ໄດ້ຮູ້ຈັກເຄື່ອງມືຂັ້ນພື້ນຖານໃນການສ້າງສາວົກແລ້ວ ຂໍໃຫ້ໃຊ້ເວລານີ້ອະທິຖານຂໍໃຫ້ອົງພຣະຜູ້ເປັນເຈົ້າຢ່າງເຈາະຈົງວ່າ ພຣະອົງຕ້ອງການໃຫ້ທ່ານໃຊ້ເຄື່ອງມືເຫຼົ່ານີ້ແນວໃດໃນໄລຍະເວລາສາມເດືອນຂ້າງໜ້າ ເມື່ອທ່ານໄດ້ໃຊ້ເວລາຟັງພຣະອົງແລ້ວ ໃຫ້ຂຽນລາຍລະອຽດລົງໃນແຜນການຂ້າງລຸ່ມນີ້ ອະທິບາຍແຜນການຂອງທ່ານໃຫ້ຄູຝຶກສອນຂອງທ່ານຟັງແລະກຳນົດຕາຕະລາງຕິດຕາມຜົນທີ່ຊັດເຈນຂຶ້ນມາເພື່ອໃຊ້ກວດກາເບິ່ງກັນແລະກັນໃນອາທິດທີ 1,2,3,4,6,8 ແລະ 12 ຕໍ່ຈາກນີ້

ຂ້ອຍຈະເລົ່າເລື່ອງຂອງຂ້ອຍ (ຄຳພະຍານ) ແລະເລື່ອງລາວຂອງພຣະເຈົ້າ (ຂ່າວປະເສີດ) ໃຫ້ຄົນເຫຼົ່ານີ້ຟັງ:

ຂ້ອຍຈະເຊີນຊວນຄົນເຫຼົ່ານີ້ໃຫ້ມາເຂົ້າຮ່ວມໜ່ວຍທີ່ໜ້າທີ່ຮັບຜິດຊອບກັບຂ້ອຍ:

ຂ້ອຍຈະທ້າທາຍຄົນເຫຼົ່ານີ້ໃຫ້ເລີ່ມຕົ້ນຕັ້ງໜ່ວຍທີ່ມີໜ້າທີ່ຮັບຜິດຊອບຂອງຕົນເອງແລະຈະສອນພວກເຂົາວ່າຈະຕ້ອງເຮັດແນວໃດ:

ຂ້ອຍຈະເຊີນຊວນຄົນເຫຼົ່າໃຫ້ມາເລີ່ມຕັ້ງໜ່ວຍສ້າງສາວົກ ກັບຂ້ອຍ:

ຂ້ອຍຈະທ້າທາຍຄົນເຫຼົ່ານີ້ໃຫ້ເລີ່ມຕົ້ນຕັ້ງໜ່ວຍສ້າງສາວົກ ຂອງພວກເຂົາເອງແລະສອນໃຫ້ເຂົາຮູ້ວ່າຈະຕ້ອງເຮັດແນວໃດ:

ຂ້ອຍຈະເຊີນຊວນຄົນເຫຼົ່ານີ້ໃຫ້ມາເຂົ້າຮ່ວມໜ່ວຍຄວາມຫວັງຫຼືໜ່ວຍການຄົ້ນພົບໜ່ວຍສ້າງສາວົກ
(ເບິ່ງພາກເພີ່ມເຕີມ):

ຂ້ອຍຈະເຊີນຊວນຄົນເຫຼົ່ານີ້ໃຫ້ມາຢ່າງອະທິຖານກັບຂ້ອຍ:

ຂ້ອຍຈະຊ່ວຍກຽມຄົນເຫຼົ່ານີ້ໃຫ້ພ້ອມເລົ່າເລື່ອງລາວຂອງພວກເຂົາ ແລະເລື່ອງລາວຂອງພຣະເຈົ້າແລະໃຫ້ພວກເຂົາຂຽນລາຍຊື່ 100 ຄົນທີ່ພວກເຂົາມີສາຍສຳພັນນຳ:

ຂ້ອຍຈະທ້າທາຍຄົນເຫຼົ່ານີ້ໃຫ້ໃຊ້ວົງຈອນການອະທິຖານເປັນປົກກະຕິ:

ຂ້ອຍຈະນຳໃຊ້ວົງຈອນການອະທິຖານທຸກໆ____________________________(ວັນ/ອາທິດ/ເດືອນ)

ຂ້ອຍຈະຍ່າງຄຳອະທິຖານທຸກໆ______________________(ວັນ/ອາທິດ/ເດືອນ)

ຂ້ອຍຈະເຊື້ອເຊີນຄົນເຫຼົ່ານີ້ມາຮ່ວມໜ່ວຍສ້າງຜູ້ນຳທີ່ຂ້ອຍເປັນຄົນນຳ:

ຂ້ອຍຈະໜູນໃຈຄົນເຫຼົ່ານີ້ໃຫ້ເຂົ້າຮ່ວມການຝຶກອົບຮົມຊູເມ້:

ຄຳສັນຍາອື່ນໆ:

## ການຝຶກອົບຮົມຂັ້ນສູງ

## ບົດຮຽນທີ 10

ໃນການຝຶກອົບຮົມຂັ້ນສູງ ພວກເຮົາຈະມາເບິ່ງວິທີການຍົກລະດັບຄວາມເຂັ້ມແຂງໃນການສອນຂອງພວກເຮົາໂດຍການນຳໃຊ້ການປະເມີນແບບງ່າຍໆ ພວກເຮົາຈະຮຽນຮູ້ວ່າການເປັນຜູ້ນຳໃນເຄືອຂ່າຍຈະຊ່ວຍໃຫ້ຄຣິສຕະຈັກຂະໜາດນ້ອຍທີ່ກຳລັງເຕີບໃຫຍ່ຂະຫຍາຍຕົວໃຫ້ສາມາດເຂົ້າມາມີສ່ວນໄດ້ເພື່ອການບັນລຸຜົນສຳເລັດໄດ້ຫຼາຍຂຶ້ນ ແລະພວກເຮົາຈະຮຽນຮູ້ການພັດທະນາໜ່ວຍພີ່ລ້ຽງໃຫ້ຄຳປຶກສາທີ່ຈະເຮັດໃຫ້ຜູ້ນຳເຕີບໃຫຍ່ຂຶ້ນອີກລະດັບໜຶ່ງ

## ລາຍການກວດກາການສອນ

ສຳລັບການສ້າງສາວົກແບບເພີ່ມທະວີຈຳນວນ ທ່ານສາມາດນຳໃຊ້ລາຍການກວດກາການສອນເຊິ່ງເປັນເຄື່ອງມືທີ່ມີປະສິດທິພາບໃນການປະເມີນຄວາມເຂັ້ມແຂງແລະຈຸດອ່ອນຂອງທ່ານ ທ່ານສາມາດໃຊ້ເຄື່ອງມືນີ້ເພື່ອຊ່ວຍຄົນອື່ນໄດ້ ແລະຄົນອື່ນກໍ່ສາມາດໃຊ້ມັນເພື່ອຊ່ວຍທ່ານໄດ້ເຊັ່ນກັນ

ກະລຸນາປະຕິບັດຕາມຂັ້ນຕອນເຫຼົ່ານີ້ເພື່ອປະເມີນຕົວທ່ານເອງ (ໃຊ້ເວລາ 5 ນາທີຫຼືໜ້ອຍກວ່າ):

- **ຂັ້ນທີ 1** - ອ່ານເຄື່ອງມືການຝຶກອົບຮົມສາວົກໃນແຖວດ້ານຊ້າຍ
- **ຂັ້ນທີ 2** - ເຮັດເຄື່ອງໝາຍລົງໃນຊ່ອງສຳລັບແຕ່ລະເຄື່ອງມືຕາມເງື່ອນໄຂດັ່ງຕໍ່ໄປນີ້:
  - ຖ້າຫາກທ່ານບໍ່ລື້ງເຄີຍຫຼືບໍ່ເຂົ້າໃຈເຄື່ອງມືນີ້ ຈົ່ງກວດກາທີ່ຊ່ອງ**ສີດຳ**
  - ຖ້າຫາກທ່ານພໍຈະເຂົ້າໃຈແຕ່ຍັງບໍ່ທັນແນ່ໃຈໃນໃຈເຄື່ອງມືນີ້ ຈົ່ງກວດກາທີ່ຊ່ອງ**ສີແດງ**
  - ຖ້າຫາກທ່ານເຂົ້າໃຈແລະສາມາດສອນພື້ນຖານຂອງເຄື່ອງມືນີ້ ຈົ່ງກວດກາທີ່ຊ່ອງ**ສີເຫຼືອງ**
  - ຖ້າຫາກທ່ານໝັ້ນໃຈແລະສາມາດສອນເຄື່ອງມືນີ້ໄດ້ຢ່າງມີປະສິດທິຜົນ ຈົ່ງກວດກາທີ່ຊ່ອງ**ສີຂຽວ**

**ໝາຍເຫດ** - ໃຫ້ຄູຝຶກຊູເມ້ແລະຄູ່ຮ່ວມຝຶກຂອງທ່ານ ຫຼືພີ່ລ້ຽງໄດ້ເບິ່ງຜົນໄດ້ຮັບການປະເມີນຜົນຂອງທ່ານເຊັ່ນກັນ ຖ້າທ່ານກຳລັງຝຶກສອນຫຼືເປັນພີ່ລ້ຽງໃຫ້ໃຜບາງຄົນຢູ່ ທ່ານຄວນສົ່ງເຄື່ອງມືນີ້ໃຫ້ກັບລາວເພື່ອປະເມີນວ່າທ່ານຄວນໃຫ້ຄວາມເອົາໃຈໃສ່ແລະຝຶກຝົນດ້ານໃດແດ່

# ລາຍການກວດກາການສອນ

**ດໍາ:** ຝຶກໃນເລື່ອງໃໝ່ແລະເຮັດໃຫ້ແນ່ໃຈວ່າເຂົ້າໃຈ

**ແດງ:** ຢຸດແລະຢູ່ກັບພວກເຂົາຈົນກວ່າພວກເຂົາຈະເຮັດຂັ້ນພື້ນຖານໄດ້

**ເຫຼືອງ:** ເຝົ້າເບິ່ງຈົນສາມາດເຮັດໄດ້ຢ່າງຕໍ່ເນື່ອງແລ້ວ

**ຂຽວ:** ປ່ອຍໃຫ້ພວກເຂົາເຮັດເອງໄດ້ແລ້ວ ແລະຫາຄົນໃໝ່ ເພື່ອຝຶກຂຶ້ນມາ

| | ເຮັດໃຫ້ເບິ່ງ | ຊ່ວຍເຫຼືອ | ເຝົ້າເບິ່ງ | ປ່ອຍ |
|---|---|---|---|---|
| | ບໍ່ຮູ້ຈັກເລີຍ | ບໍ່ມີທັກສະ | ສາມາດເຮັດໄດ້ | ມີຄວາມຊໍານານ |
| | ບົດບາດຂອງພີ່ລ້ຽງ | | | |
| | ພີ່ລ້ຽງບອກວິທີການແລະຂໍ້ມູນ | ພີ່ລ້ຽງບອກວິທີການ ແລະໃຫ້ຄວາມຊ່ວຍເຫຼືອ | ພີ່ລ້ຽງໃຫ້ຄວາມຊ່ວຍເຫຼືອແລະໜູນໃຈ | ພີ່ລ້ຽງຮັບຟັງຄວາມກ້າວໜ້າ |
| | ວາງແຜນ | | | |
| **ເຄື່ອງມືໃນການສອນ** | ພີ່ລ້ຽງເປັນຜູ້ຕັດສິນໃຈ | ພີ່ລ້ຽງ/ນ້ອງລ້ຽງ ປຶກສາກັນພີ່ລ້ຽງເປັນຄົນ ຕັດສິນໃຈ | ພີ່ລ້ຽງ/ນ້ອງລ້ຽງ ປຶກສາກັນ ນ້ອງລ້ຽງເປັນຄົນຕັດສິນໃຈ | ນ້ອງລ້ຽງ ເປັນຄົນຕັດສິນໃຈ |
| ການສ້າງສາວົກແບບເປັດນ້ອຍ | | | | |
| ເລົ່າເລື່ອງລາວຂອງທ່ານ (ຄໍາພະຍານ) | | | | |
| ເລົ່າເລື່ອງລາວຂອງພຣະເຈົ້າ (ຂ່າວປະເສີດ) | | | | |
| ການເປັນຜູ້ເບິ່ງແຍງຄວາມສໍາພັນ-ລາຍຊື່ 100 ຄົນ | | | | |
| ການເລັ່ງການຂັບເຄື່ອນ | | | | |
| ພັນທະກິດແບບບໍ່ເປັນຂັ້ນຕອນ | | | | |
| ຮູບແບບໜ່ວຍສ້າງສາວົກ | | | | |
| ຄຣິສຕະຈັກຕາມບ້ານ-ຮັກພຣະເຈົ້າ/ຮັກຜູ້ອື່ນ ສ້າງສາວົກ | | | | |
| ການເປັນສ່ວນໜຶ່ງຂອງຄຣິສຕະຈັກ | | | | |
| ວົງຈອນການຮຽນຮູ້ | | | | |
| ໜ່ວຍທີ່ມີໜ້າທີ່ຮັບຜິດຊອບ | | | | |
| ການລ້ຽງດູຕົນເອງ | | | | |
| • ອ່ານພຣະຄໍາພີທຸກໆມື້ (ເຊື່ອຟັງ) | | | | |
| • ອະທິຖານ -ເວົ້າແລະຟັງ (ວົງຈອນການອະທິຖານ) | | | | |
| • ຊີວິດຝ່າຍຮ່າງກາຍ-ສາມັກຄີທໍາ (ເຊິ່ງກັນແລະກັນ) | | | | |
| • ການຂົ່ມເຫງແລະການທົນທຸກ | | | | |
| ຕາທີ່ເບິ່ງເຫັນວ່າອານາຈັກຂອງພຣະເຈົ້າບໍ່ໄດ້ຢູ່ໃນບ່ອນໃດ | | | | |
| ການຊອກຫາບຸກຄົນແຫ່ງສັນຕິສຸກ (ມກ.10, ລກ.10) | | | | |
| ການຍ່າງອະທິຖານ | | | | |
| ການເປັນຄຣິສຕະຈັກ | | | | |
| • ການສາມັກຄີທໍາ (ກິນເຂົ້າຮ່ວມກັນ) | | | | |
| • ການສັນລະເສີນແລະການນະມັດສະການ | | | | |
| • ການສຶກສາພຣະຄໍາພີ (ເຊື່ອຟັງ,ຝຶກຝົນ) | | | | |
| • ການເລົ່າເລື່ອງພຣະເຢຊູເຈົ້າໃຫ້ຜູ້ອື່ນຟັງ | | | | |
| • ບັບຕິສະມາ | | | | |

## ໜ່ວຍພີ່ລ້ຽງໃຫ້ຄຳປຶກສາ

ພຣະເຢຊູເຈົ້າກ່າວວ່າ - "ເຮົາມອບກົດບັນຍັດຂໍ້ໃໝ່ໃຫ້ພວກເຈົ້າຄື: ຈົ່ງຮັກຊຶ່ງກັນແລະກັນ ເຮົາຮັກພວກເຈົ້າຢ່າງໃດ ພວກເຈົ້າກໍຈົ່ງຮັກຊຶ່ງກັນແລະກັນຢ່າງນັ້ນ. ຖ້າພວກເຈົ້າຮັກຊຶ່ງກັນແລະກັນ ທຸກຄົນກໍຈະຮູ້ວ່າພວກເຈົ້າເປັນສາວົກຂອງເຮົາ."

ໜ່ວຍພີ່ລ້ຽງໃຫ້ຄຳປຶກສາ ປະກອບໄປດ້ວຍຜູ້ນຳທີ່ກຳລັງຕັ້ງໜ່ວຍສ້າງສາວົກ. ໜ່ວຍນີ້ໃຊ້ຮູບແບບໜ່ວຍສ້າງສາວົກແລະເປັນວິທີທີ່ມີປະສິດທິພາບຫຼາຍໃນການປະເມີນສະພາບທາງຝ່າຍວິນຍານໃນວຽກງານຂອງພຣະເຈົ້າໃນພື້ນທີ່ທີ່ທ່ານຢູ່

ໜ່ວຍພີ່ລ້ຽງໃຫ້ຄຳປຶກສາ ເປັນໜ່ວຍທີ່ໃຫ້ຄຳປຶກສາໃນລະດັບຜູ້ນຳສູ່ຜູ້ນຳ ໃຊ້ໄດ້ກັບຜູ້ເຊື່ອແຕ່ລະຄົນ ໃນຄຣິສຕະຈັກພື້ນຖານ ອົງກອນພັນທະກິດແລະແມ່ນແຕ່ເຄືອຂ່າຍຄຣິສຕະຈັກພື້ນຖານລຽບງ່າຍທີ່ຂະຫຍາຍອອກກວ້າງໄກໄປທົ່ວໂລກ

ໜ່ວຍພີ່ລ້ຽງໃຫ້ຄຳປຶກສາ ເຮັດຕາມແບບຢ່າງພັນທະກິດຂອງພຣະເຢຊູເຈົ້າໃນພຣະຄຳພີ ຈາກນັ້ນມີການຖາມຄຳຖາມເຊິ່ງກັນແລະກັນແລະສະແດງຄວາມຄິດເຫັນ ບົດຮຽນຕ່າງໆເຫຼົ່ານີ້ບໍ່ໄດ້ມີຈຸດປະສົງເພື່ອຈະເຮັດໃຫ້ບຸກຄົນໃດໜຶ່ງເຫັນຄວາມສຳຄັນຂອງຕົນເອງຫຼາຍຂຶ້ນຫຼືຮູ້ສຶກຕໍ່າຕ້ອຍດ້ອຍຄ່າ ແຕ່ມີຈຸດປະສົງເພື່ອສອນແລະສ້າງກຳລັງໃຈ

ຮູບແບບງ່າຍໆດັ່ງຕໍ່ໄປນີ້ມີດັ່ງນີ້:

**ເບິ່ງຍ້ອນກັບຫຼັງ** (1/3 ຂອງເວລາທີ່ມີ)

ໃນສ່ວນທຳອິດ – ໃຊ້ເວລາໃນການອະທິຖານຮ່ວມກັນ ຈົ່ງເບິ່ງແຍງເຊິ່ງກັນແລະກັນ ເຊັ່ນດຽວກັນກັບທ່ານເຄີຍເຮັດໃນໜ່ວຍສ້າງສາວົກ ຈາກນັ້ນໃຊ້ເວລາເພື່ອທວນຄືນນິມິດຂອງໜ່ວຍແລະຄວາມຊື່ສັດຂອງໜ່ວຍຕໍ່ຄຳໝັ້ນສັນຍາທີ່ໃຫ້ໄວ້ໃນຄັ້ງທີ່ຜ່ານມາ:

ທ່ານໃກ້ຊິດກັບພຣະຄຣິດສໍ່າໃດ? (ອ່ານພຣະຄຳພີ ອະທິຖານ ເຊື່ອວາງໃຈ ເຊື່ອຟັງ ຄວາມສຳພັນຕ່າງໆ?) ໜ່ວຍຂອງທ່ານສາມາດປະຕິບັດຕາມແບບແຜນທີ່ວາງໄວ້ໃນບົດຮຽນທີ່ຜ່ານມາໄດ້ສໍ່າໃດ? ທວນຄືນສິ່ງເຫຼົ່ານັ້ນ

**ເບິ່ງຂຶ້ນໄປ** (1/3 ຂອງເວລາທີ່ມີ)

ໃຫ້ໜ່ວຍປຶກສາຫາລືຄຳຖາມຕໍ່ໄປນີ້:

1. ການເຮັດຮູບພາບສີ່ສ່ວນ(ດິນສີ່ປະເພດ)ຂອງທ່ານເປັນແນວໃດແດ່?
2. ມີຫຍັງທີ່ກຳລັງດຳເນີນໄປດ້ວຍດີ? ຄວາມທ້າທາຍໃຫຍ່ທີ່ສຸດສຳລັບທ່ານແມ່ນຫຍັງ?
3. ທວນຄືນເບິ່ງຕາຕະລາງຮູບພາບລຸ້ນຕ່າງໆ
4. ມີຫຍັງທີ່ທ້າທາຍທ່ານຫຼືມີຫຍັງທີ່ເຂົ້າໃຈຍາກ?
5. ພຣະເຈົ້າຊົງສຳແດງຫຍັງແກ່ທ່ານໃນຊ່ວງນີ້?
6. ຜູ້ນຳຫຼືສະມາຊິກຄົນອື່ນໆມີຄຳຖາມຫຼືບໍ?

**ເບິ່ງໄປທາງໜ້າ** (1/3 ຂອງເວລາທີ່ມີ)

ໃຊ້ເວລາການອະທິຖານຢ່າງງຽບໆ ຮ່ວມກັບສະມາຊິກໜ່ວຍ ຂໍໃຫ້ພຣະວິນຍານບໍລິສຸດເຈົ້າສະແດງໃຫ້ພວກເຂົາເຫັນວິທີການຕອບຄຳຖາມເຫຼົ່ານີ້ແນວໃດ:

7. ພຣະເຈົ້າຊົງຢາກໃຫ້ຂ້າພຣະເຈົ້າເຮັດຫຍັງຫຼືມີເປົ້າໝາຍຫຍັງໃນຊ່ວງເວລານີ້ກ່ອນທີ່ຈະກັບມາປະຊຸມໜ່ວຍໃນຄັ້ງຕໍ່ໄປ? (ໃຊ້ເຄື່ອງມືໃນການວິເຄາະດິນສີ່ຊະນິດ ເພື່ອຊ່ວຍທ່ານເຫັນວຽກງານໄດ້ຈະແຈ້ງ)

8. ພີ່ລ້ຽງຂອງຂ້າພຣະເຈົ້າຫຼືສະມາຊິກຄົນອື່ນໃນໜ່ວຍຈະຊ່ວຍຂ້າພຣະເຈົ້າໃນວຽກງານນີ້ໄດ້ແນວໃດແດ່?

ສຸດທ້າຍ ໃຊ້ເວລາທີ່ອະທິຖານກັບພຣະເຈົ້າຮ່ວມກັນ

ຂໍໃຫ້ທຸກຄົນອະທິຖານເພື່ອສະມາຊິກແຕ່ລະຄົນແລະຂໍໃຫ້ພຣະຜູ້ເປັນເຈົ້າກະກຽມຈິດໃຈຂອງຄົນທີ່ສະມາຊິກຂອງໜ່ວຍຈະມີໂອກາດເຂົ້າເຖິງໃນຊ່ວງທີ່ແຍກຈາກກັນໄປ

ຈົ່ງອະທິຖານໃຫ້ພຣະເຈົ້າປະທານຄວາມກ້າຫານແລະກຳລັງໃຫ້ສະມາຊິກແຕ່ລະຄົນໃນໜ່ວຍເພື່ອຈະນຳສິ່ງທີ່ພຣະອົງໄດ້ສອນໃນບົດຮຽນຕ່າງໆ ໄປນຳໃຊ້ແລະປະຕິບັດຕາມ ຖ້າຜູ້ນຳທີມທີ່ມີປະສົບການແລ້ວຕ້ອງການອະທິຖານເພື່ອຜູ້ນຳໃໝ່ເປັນພິເສດກໍ່ສາມາດໃຊ້ເວລາຊ່ວງນີ້ໄດ້

ເນື່ອງຈາກໜ່ວຍຮູບແບບນີ້ມັກພົບກັນຢູ່ບ່ອນທີ່ຫ່າງໄກ ບໍ່ໄດ້ຢູ່ໃກ້ກັນ ທ່ານອາດຈະບໍ່ສາມາດເຮັດ
ພິທີມະຫາສະໜິດຫຼືກິນເຂົ້າຮ່ວມກັນໄດ້ ແຕ່ຂໍໃຫ້ທ່ານໃຫ້ເວລາໃນການຖາມກ່ຽວກັບເລື່ອງສຸຂະພາບຄອບຄົວ ຫຼືໝູ່ເພື່ອນຂອງເຂົາ

## ຮູບພາບວິເຄາະສີ່ດ້ານ: ດິນສີ່ປະເພດ




**ດິນທີ່ເກີດຜົນຈຳນວນຫຼວງຫຼາຍ:** ໃຜແມ່ນຜູ້ເຊື່ອທີ່ທ່ານກຳລັງຕັດສິນໃຈເລືອກແລະກຽມພວກເຂົາແລະຮັບຜິດຊອບຮ່ວມກັບພວກເຂົາໃນການສ້າງສາວົກໃໝ່ ທ່ານຈະເຮັດເມື່ອໃດແລະເຮັດແນວໃດ?

**ດິນທີ່ວ່າງເປົ່າ:** ບ່ອນໃດທີ່ທ່ານກຳລັງວາງແຜນທີ່ຈະຂະຫຍາຍອານາຈັກຂອງພຣະເຈົ້າຫຼືກັບໃຜ
(ຄົນກຸ່ມໃດ)?

**ດິນທີ່ກຳລັງຫວ່ານ:** ທ່ານກຳລັງເລົ່າຂ່າວປະເສີດເລື່ອງອານາຈັກຂອງພຣະເຈົ້າຢູ່ໃສຫຼືກັບໃຜ? ແລະແນວໃດ?

**ດິນທີ່ກຳລັງເຕີບໃຫຍ່:** ທ່ານກຳລັງກະກຽມຄົນໃຫ້ພ້ອມ ຊ່ວຍເຂົາເຕີບໂຕທາງວິນຍານ ຊີວິດສ່ວນຕົວ ແລະການຂະຫຍາຍເຄືອຂ່າຍແນວໃດ?

**ດິນທີ່ກຳລັງເກັບກ່ຽວ:** ຄອບຄົວຝ່າຍວິນຍານ
(ຄຣິສຕະຈັກຕາມບ້ານ) ກຳລັງເກີດຂຶ້ນໃໝ່ແນວໃດ?

# ຮູບແບບຄຣິສຕະຈັກລຽບງ່າຍແມ່ນສະແດງດ້ວຍຕາຕະລາງສະແດງລຸ້ນ




ຊື່ຫົວໜ້າໜ່ວຍ




ສະຖານທີ່/ວັນທີ່ເລີ່ມຮຽນ

# ພາກເພີ່ມເຕີມ

## ຂໍ້ພຣະຄໍາພີສໍາລັບໜ່ວຍສ້າງສາວົກ

### ຄວາມຫວັງ (ສໍາລັບຜູ້ທີ່ສະແຫວງຫາ)

ພຣະຄໍາຊຸດນີ້ຈະໃຊ້ສໍາລັບຊ່ວງ "ເບິ່ງຂຶ້ນເທິງ" ພຣະຄໍາບາງຕອນອາດຈະຕ້ອງໃຊ້ເວລາໃນການເຂົ້າໜ່ວຍຫຼາຍກວ່າໜຶ່ງເທື່ອ

1. ຄວາມຫວັງສໍາລັບຄົນບາບ: ລູກາ 18:9-14
2. ຄວາມຫວັງສໍາລັບຜູ້ທຸກຍາກ: ລູກາ 12:13-34
3. ຄວາມຫວັງສໍາລັບຜູ້ທີ່ຫຼົບໜີ: ລູກາ 15:11-32
4. ຄວາມຫວັງສໍາລັບຜູ້ຫຼົງຫາຍ: ລູກາ 19:1-10
5. ຄວາມຫວັງສໍາລັບຜູ້ໂສກເສົ້າ: ໂຢຮັນ 11:1-44
6. ຄວາມຫວັງສໍາລັບຜູ້ສະແຫວງຫາ: ໂຢຮັນ 3:1-21

### ໝາຍສໍາຄັນຂອງໂຢຮັນ (ສໍາລັບຜູ້ທີ່ສະແຫວງຫາ)

ພຣະຄໍາຂ້າງລຸ່ມນີ້ແມ່ນໃຊ້ສໍາລັບການ "ເບິ່ງຂຶ້ນເທິງ" ພຣະຄໍາບາງຕອນອາດຈະຕ້ອງໃຊ້ເວລາໃນການເຂົ້າໜ່ວຍຫຼາຍກວ່າໜຶ່ງເທື່ອ

1. ຊົງປ່ຽນນໍ້າເປັນເຫຼົ້າອະງຸ່ນ: ໂຢຮັນ 2:1-12
2. ຮັກສາລູກຊາຍຂອງຂ້າລາຊະການ: ໂຢຮັນ 4:46-54
3. ຊົງຮັກສາຄົນເປັນເປ້ຍ: ໂຢຮັນ 5:1-17
4. ຊົງລ້ຽງຄົນຫ້າພັນຄົນ: ໂຢຮັນ 6:1-14
5. ຊົງຍ່າງເທິງນໍ້າ: ໂຢຮັນ 6:15-25
6. ຊົງຮັກສາຄົນຕາບອດແຕ່ເກີດ: ໂຢຮັນ 9:1-41
7. ຊົງໃຫ້ລາຊະໂຣຄືນມາຈາກຕາຍ:ໂຢຮັນ 11:1-46

### ເລີ່ມຕົ້ນຕິດຕາມພຣະອົງ: ການປະຊຸມ 8 ຄັ້ງທໍາອິດ

ພຣະຄໍາຊຸດນີ້ເໝາະສໍາລັບຜູ້ທີ່ເປັນຄຣິດສະຕຽນແລ້ວ ແຕ່ຍັງບໍ່ເຄີຍເຂົ້າໜ່ວຍແບບນີ້ມາກ່ອນ ພາກສ່ວນຂອງການຝຶກອົບຮົມນີ້ແມ່ນເປັນຕົວຢ່າງພາບລວມຂອງທັງ 8 ບົດຮຽນການຝຶກອົບຮົມສ່ວນຕົວຈະເລີ່ມຕົ້ນໃນການເຂົ້າໜ່ວຍຄັ້ງຕໍ່ໄປ

1. **ເລົ່າເລື່ອງຂອງທ່ານ**

**ເບິ່ງຂຶ້ນເທິງ:** ມາຣະໂກ 5:1-20 ຕຶກຕອງຂໍ້ 18-20 ເປັນພິເສດ

**ຝຶກປະຕິບັດ**: ຝຶກເລົ່າເລື່ອງລາວຂອງທ່ານ ທ່ານຈໍາເປັນຕ້ອງກຽມເລື່ອງລາວຂອງທ່ານໄວ້ແລະພ້ອມທີ່ຈະໃຫ້ຄົນອື່ນຟັງຕອນທີ່ທ່ານປະກາດເລື່ອງພຣະເຢຊູເຈົ້າ ນີ້ແມ່ນວິທີການເລົ່າເລື່ອງຂອງຕົວທ່ານເອງ:

- ເລົ່າເຖິງຊີວິດຂອງທ່ານກ່ອນທີ່ຈະມາເຊື່ອພຣະເຢຊູເຈົ້າ ອະທິບາຍຄວາມຮູ້ສຶກຕ່າງໆ (ຄວາມເຈັບປວດ ຄວາມໂດດດ່ຽວ) ຕັ້ງຄໍາຖາມ (ເກີດຫຍັງຂຶ້ນກັບພວກເຮົາຫຼັງຈາກຕາຍໄປແລ້ວ) ຫຼືເລົ່າເຖິງບັນຫາທີ່ທ່ານເຄີຍມີມາກ່ອນເຊື່ອພຣະເຢຊູເຈົ້າ
- ເລົ່າວ່າທ່ານເປັນຜູ້ເຊື່ອພຣະເຢຊູເຈົ້າໄດ້ແນວໃດ - ເລົ່າເລື່ອງພຣະເຢຊູເຈົ້າໃຫ້ພວກເຂົາຟັງ! ສິ່ງທີ່ສໍາຄັນໃນການເລົ່າເລື່ອງຂອງພຣະເຢຊູເຈົ້າແມ່ນ ເຮົາທຸກຄົນເຮັດໃຫ້ພຣະເຈົ້າບໍ່ພໍໃຈເພາະບາບຂອງເຮົາ ພວກເຮົາຕ້ອງຕາຍເພາະຄວາມບາບຂອງເຮົາ ແຕ່ພວກເຮົາໄດ້ຮັບການຊ່ວຍໃຫ້ພົ້ນ ເມື່ອພວກເຮົາເຊື່ອວາງໃຈໃນພຣະເຢຊູເຈົ້າ ຜູ້ທີ່ສິ້ນພຣະຊົນຍ້ອນຄວາມບາບຂອງເຮົາ ພຣະອົງໄດ້ຖືກຝັງໄວ້ ແລະເປັນຂຶ້ນມາຈາກຄວາມຕາຍ
- ເລົ່າເລື່ອງຊີວິດຂອງຫຼັງຈາກເຊື່ອພຣະເຢຊູເຈົ້າ ເລົ່າໃຫ້ພວກເຂົາຟັງວ່າພຣະເຢຊູເຈົ້າຊົງປ່ຽນແປງຊີວິດຂອງທ່ານແນວໃດ ເລົ່າເຖິງຄວາມປິຕິຍິນດີ ສັນຕິສຸກແລະການໃຫ້ອະໄພທີ່ພຣະເຢຊູເຈົ້າປະທານໃຫ້
- ເຊື້ອເຊີນໃຫ້ຕອບສະໜອງ ເລື່ອງລາວຂອງຄວນດຶງດູດໃຈໃຫ້ຜູ້ຟັງຕອບສະໜອງ ຄໍາຖາມທີ່ຈະຊ່ວຍໃຫ້ທ່ານຮູ້ວ່າຜູ້ຟັງມີຄວາມສົນໃຈໃນເລື່ອງຈິດວິນຍານສໍ່າໃດ ທ່ານອາດຈະໃຊ້ຄໍາຖາມວ່າ: "ເຈົ້າຢາກຮູ້ບໍ່ວ່າເຈົ້າຈະຮັບການອະໄພໄດ້ແນວໃດ?" ຫຼື "ເຈົ້າຢາກໃຫ້ພຣະເຈົ້າປ່ຽນແປງຊີວິດຂອງເຈົ້າບໍ?"
- ເລົ່າເລື່ອງຂອງທ່ານເອງ (3 ນາທີຫຼືໜ້ອຍກວ່ານັ້ນ) ຄວນເລົ່າໃຫ້ສັ້ນແລະໜ້າສົນໃຈ ຢ່າໃຫ້ເບື່ອແລະຢ່າເວົ້າດົນເກີນໄປຈົນວ່າຜູ້ຟັງໝົດຄວາມສົນໃຈ
- ຝຶກເລົ່າເລື່ອງລາວຂອງທ່ານກັບຜູ້ໃດຜູ້ໜຶ່ງໃນໜ່ວຍ
- ເລືອກ 5 ຄົນທີ່ທ່ານຈະເລົ່າເລື່ອງລາວໃຫ້ຟັງ ຂໍໃຫ້ພຣະເຈົ້າ ຊົງສໍາແດງວ່າພຣະອົງຢາກໃຫ້ທ່ານເລົ່າເລື່ອງລາວຂອງທ່ານໃຫ້ໃຜຟັງໃນອາທິດນີ້

2. **ເລົ່າເລື່ອງລາວຂອງພຣະເຢຊູເຈົ້າ**

**ເບິ່ງຂຶ້ນເທິງ**: 1 ໂກຣິນໂທ 15:1-8; ໂລມ 3:23; ໂລມ 6:23

**ພາກປະຕິບັດ:** ໃຫ້ທຸກຄົນໃນໜ່ວຍໄດ້ຝຶກເລົ່າເລື່ອງຂອງພຣະເຢຊູເຈົ້າໂດຍໃຊ້ຮູບກ້ອນພາບຂອງພຣະເຢຊູເຈົ້າຫຼືວິທີການອື່ນໆທີ່ບໍ່ສັບສົນ ເພື່ອເລົ່າເລື່ອງຂອງທ່ານແລະເລື່ອງຂອງພຣະເຢຊູກັບ 5 ຄົນໃນອາທິດນີ້ ຂໍໃຫ້ຝຶກແບບນີ້ທຸກໆອາທິດ

3. **ສາວົກແລະປາ**

**ເບິ່ງຂຶ້ນເທິງ:** ມາຣະໂກ **1:16-20**

**ພາກປະຕິບັດ:** ຂຽນລາຍຊື່ຄົນທີ່ທ່ານຮູ້ຈັກ **100** ຄົນໃສ່ເຈ້ຍ (ສະມາຊິກໃນຄອບຄົວ, ໝູ່ເພື່ອນ, ເພື່ອນບ້ານ, ເພື່ອນຮ່ວມງານ, ເພື່ອນຮ່ວມຫ້ອງຮຽນ) ຄົນທີ່ຄວນຈະໄດ້ຍິນເລື່ອງລາວຂອງພຣະເຢຊູເຈົ້າ ເລົ່າເລື່ອງລາວຂອງທ່ານແລະເລື່ອງຂອງພຣະເຢຊູເຈົ້າໃຫ້ກັບ **5** ຄົນໃນອາທິດນີ້ ເຮັດແບບນີ້ທຸກໆອາທິດ

4. **ບັບຕິສະມາ**

**ເບິ່ງຂຶ້ນເທິງ:** ໂຣມ 6:3-4; ກິດຈະການ 8:26-40

**ພາກປະຕິບັດ**: ຊອກຫານ້ຳໃກ້ຄຽງ (ອ່າງນ້□າ ອ່າງລອຍນ້ຳ ແມ່ນ້ຳ  ໜອງນ້ຳ) ແລະໃຫ້ບັບຕິສະມາຜູ້ເຊື່ອໃໝ່ທຸກຄົນ ກະລຸນາໃຫ້
ບັບຕິສະມາແກ່ຜູ້ເຊື່ອໃໝ່ທັນທີ ຖ້າທ່ານຢາກຮຽນຮູ້ເລື່ອງການໃຫ້ບັບຕິສະມາ ເພີ່ມເຕີມອ່ານໃນ ກິດຈະການ 2:37-41, 8:5-13, 8:36-38, 9:10-19, 10:47-48, 16:13-15, 16:27-34, ກິດຈະການ 18:5-9 ແລະ 1ໂກຣິນໂທ1:10-17, ກິດຈະການ 19:1-5, ກິດຈະການ 22:14-17
ເລົ່າເລື່ອງຂອງທ່ານແລະເລື່ອງຂອງພຣະເຢຊູເຈົ້າ
ກັບ 5 ຄົນໃນອາທິດນີ້ຂໍໃຫ້ຝຶກແບບນີ້ທຸກໆອາທິດ

5. **ພຣະຄຳພີ**

**ເບິ່ງຂຶ້ນເທິງ:** 2 ຕີໂມທຽວ 3:14-16

**ພາກປະຕິບັດ:** ຈື່ຈຳຄຳຖາມສຳລັບການສຶກສາພຣະຄຳເຈັດຂໍ້ (ຄຳຖາມຂໍ້ 1-7 ໃນການປະຊຸມປົກກະຕິທຸກຄັ້ງ)
ເລົ່າເລື່ອງຂອງທ່ານແລະເລື່ອງຂອງພຣະເຢຊູເຈົ້າກັບ 5 ຄົນໃນອາທິດນີ້ຂໍໃຫ້ຝຶກແບບນີ້ທຸກໆອາທິດ

6. **ລົມກັບພຣະເຈົ້າ**

**ເບິ່ງຂຶ້ນເທິງ**: ມັດທາຍ 6:9-13

**ພາກປະຕິບັດ:** ຮຽນຮູ້ວິທີການນຳໃຊ້ມືເພື່ອປະກອບການເວົ້າກັບ ພຣະເຈົ້າ ຈົ່ງອະທິຖານຕາມແບບພຣະເຢຊູເຈົ້າໃນມັດທາຍ 6:9-13 ໂດຍການໃຊ້ມືເປັນສັນຍາລັກ

1. **ຝາມື = ຄວາມສຳພັນ** ຝາມືເປັນຖານຂອງຫ້ານິ້ວຂອງພວກເຮົາ ການໃຊ້ເວລາສ່ວນຕົວກັບພຣະເຈົ້າກໍ່ເປັນພື້ນຖານຂອງຄວາມສຳພັນສ່ວນຕົວຂອງເຮົາກັບພຣະອົງ "ພຣະບິດາຂອງຂ້າພຣະອົງທັງຫຼາຍຜູ້ຊົງສະຖິດໃນສະຫວັນ"[ມັດທາຍ 6:9]
2. **ນິ້ວໂປ້ = ການນະມັດສະການ** ນິ້ວໂປ້ໄດ້ເຕືອນພວກເຮົາວ່າເຮົາຕ້ອງນະມັດສະການພຣະເຈົ້າກ່ອນທີ່ຈະຂໍຫຍັງ "...ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄລົບບູຊາ" [ມັດທາຍ 6:9]
3. **ນິ້ວຊີ້ = ຍອມຈຳນົນ** ພວກເຮົາຍອມຈຳນົນໂດຍມອບຖວາຍຊີວິດຂອງເຮົາ ແຜນຄອບຄົວ ການເງິນ ວຽກງານ ອະນາຄົດ ທຸກສິ່ງທຸກຢ່າງໃນຊີວິດຂອງເຮົາຕໍ່ພຣະເຈົ້າ ຂໍໃຫ້ພຣະລາຊະອານາຈັກຂອງພຣະອົງມາຕັ້ງຢູ່ [ມັດທາຍ 6:10]
4. **ນິ້ວກາງ = ຄຳຮ້ອງຂໍ** ຈາກນັ້ນ ພວກເຮົາຂໍໃຫ້ພຣະເຈົ້າຊ່ວຍຕອບສະໜອງຄວາມຕ້ອງການຂອງພວກເຮົາ "ຂໍຊົງໂຜດປະທານອາຫານປະຈຳວັນ ໃຫ້ແກ່ຂ້າພຣະອົງທັງຫລາຍໃນກາລະວັນນີ້"[ມັດທາຍ 6:11]
5. **ນິ້ວນາງ = ການໃຫ້ອະໄພ** ພວກເຮົາຂໍໃຫ້ພຣະເຈົ້າຍົກໂທດຄວາມຜິດບາບຂອງພວກເຮົາແລະພວກເຮົາຕ້ອງຍົກໂທດໃຫ້ຜູ້ອື່ນນຳ "ຊົງໂຜດຍົກໂທດໃຫ້ຂ້າພຣະອົງເໝືອນຂ້າພຣະອົງຍົກໂທດໃຫ້ແກ່ຜູ້ທີ່ເຮັດຜິດຕໍ່ຂ້າພຣະອົງນັ້ນ" [ມັດທາຍ 6:12]

6. **ນິ້ວກ້ອຍ = ການປ້ອງກັນ** ພວກເຮົາຂໍການປ້ອງກັນ "ແລະຂໍຢ່າພາຂ້າພຣະອົງເຂົ້າໄປໃນການທົດລອງ ແຕ່ຂໍຊົງໂຜດໃຫ້ພົ້ນຈາກການຊົ່ວຮ້າຍ [ມັດທາຍ 6:13]

7. **ນິ້ວໂປ້ (ອີກເທື່ອໜຶ່ງ) = ການນະມັດສະການ** ພວກເຮົາປິດທ້າຍດ້ວຍການນະມັດສະການພຣະເຈົ້າຜູ້ຊົງຍິ່ງໃຫຍ່ ແບບດຽວກັບທີ່ພວກເຮົາໄດ້ເຮັດໃນຕອນເລີ່ມຕົ້ນ "ເພາະວ່າລາຊະອານາຈັກ ລິດອຳນາດ ແລະພຣະລັດສະໝີກໍເປັນຂອງພຣະອົງສືບໆ ໄປເປັນນິດ ອາແມນ" [ມັດທາຍ 6:13]

ເລົ່າເລື່ອງຂອງທ່ານແລະເລື່ອງຂອງພຣະເຢຊູເຈົ້າກັບ 5 ຄົນໃນອາທິດນີ້ ຂໍໃຫ້ຝຶກແບບນີ້ທຸກໆອາທິດ

---

## 7. ເວລາຂອງຄວາມທຸກຍາກລຳບາກ

**ເບິ່ງຂຶ້ນເທິງ:** ກິດຈະການ 5:17-42; ມັດທາຍ 5:43-44

**ພາກປະຕິບັດ:** ເລົ່າໃຫ້ສະມາຊິກຂອງໜ່ວຍຟັງເຖິງຄວາມຫຍຸ້ງຍາກທີ່ທ່ານປະເຊີນຍ້ອນຄວາມເຊື່ອໃໝ່ຂອງທ່ານ ຄິດເຖິງຄວາມຫຍຸ້ງຍາກຕ່າງໆ ທີ່ທ່ານອາດຈະຕ້ອງພົບ ໃຫ້ສົມມຸດວ່າທ່ານຈະຕອບສະໜອງດ້ວຍຄວາມກ້າຫານແລະຄວາມຮັກດັ່ງທີ່ພຣະເຢຊູເຈົ້າ ສອນໄວ້ໄດ້ແນວໃດ ຈົ່ງອະທິຖານເພື່ອແຕ່ລະຄົນຫຼັງຈາກທີ່ພວກເຂົາໄດ້ເລົ່າເລື່ອງແລ້ວ ເລົ່າເລື່ອງຂອງທ່ານແລະເລື່ອງຂອງ
ພຣະເຢຊູເຈົ້າກັບ5ຄົນໃນອາທິດນີ້ ຂໍໃຫ້ຝຶກແບບນີ້ທຸກໆອາທິດ

---

## 8. ເຕີບໃຫຍ່ເປັນຄຣິສຕະຈັກ

**ເບິ່ງຂຶ້ນເທິງ:** ກິດຈະການ 2:42-47, 1 ໂກຣິນໂທ 11:23-34

**ພາກປະຕິບັດ:** ປຶກສາຫາລືກ່ຽວກັບສິ່ງທີ່ໜ່ວຍຂອງທ່ານຄວນເຮັດເພື່ອຈະເປັນຄືກັບຄຣິສຕະຈັກທີ່ໄດ້ອະທິບາຍໄວ້ໃນພຣະຄຳພີ ເອົາເຈ້ຍແຜ່ນໜຶ່ງມາແລ້ວແຕ້ມວົງມົນເປັນເສັ້ນຈໍ້າໆ ເພື່ອເປັນຕົວແທນຂອງໜ່ວຍຂອງທ່ານ ເທິງວົງມົນຂຽນຕົວເລກ 3 ໂຕຄືຈຳນວນຜູ້ທີ່ມາເຂົ້າໜ່ວຍເປັນປະຈຳ(ຮູບຄົນ) ຈຳນວນຜູ້ເຊື່ອໃນພຣະເຢຊູເຈົ້າ(ໄມ້ກາງແຂນ)ຈຳນວນຜູ້ທີ່ໄດ້ຮັບບັບຕິສະມາແລ້ວ(ນໍ້າ)



ຖ້າໜ່ວຍຂອງທ່ານມີຄວາມຕັ້ງໃຈທີ່ຈະເຕີບໃຫຍ່ເປັນຄຣິສຕະຈັກ ໃຫ້ເຊື່ອມຕໍ່ເສັ້ນຈໍ້າໆ ຮອບວົງມົນຈົນກາຍເປັນເສັ້ນເຕັມ ຖ້າທ່ານມີການປະຕິບັດຕາມຮູບພາບທີ່ເປັນສ່ວນປະກອບຕ່າງໆໃນວົງມົນເລື້ອຍໆ ໃຫ້ທ່ານແຕ້ມຮູບພາບເຫຼົ່ານີ້ເຂົ້າໃນວົງມົນ ແຕ່ຖ້າທ່ານບໍ່ເຮັດບາງສິ່ງບາງຢ່າງຫຼືທ່ານໃຫ້ຄົນອື່ນມາຊ່ວຍເຮັດໃຫ້ ໃຫ້ທ່ານແຕ້ມຮູບພາບເຫຼົ່ານີ້ຢູ່ນອກວົງມົນ



1. ຄວາມຕັ້ງໃຈທີ່ຈະເຕີບໃຫຍ່ເປັນຄຣິສຕະຈັກ: ໃຊ້ເສັ້ນເຕັມເພື່ອແຕ້ມຮູບວົງມົນແທນເສັ້ນຈໍ້າໆ
2. ການບັບຕິສະມາ – ນໍ້າ
3. ພຣະຄຳພີ – ປຶ້ມ
4. ລະນຶກເຖິງພຣະເຢຊູເຈົ້າ–ເຂົ້າຈີ່ແລະຈອກນໍ້າ
5. ການສາມັກຄີທຳ – ຫົວໃຈ
6. ການຖວາຍແລະພັນທະກິດ – ເຄື່ອງໝາຍເງິນ
7. ອະທິຖານ – ມືພະນົມ
8. ສັນລະເສີນພຣະເຈົ້າ – ຄົນຍົກມື
9. ເລົ່າເລື່ອງຂອງພຣະເຢຊູເຈົ້າໃຫ້ຄົນອື່ນໃຫ້ຟັງ–ໝູ່ເພື່ອນຈູງມືກັນ
10. ລາວນຳມາສູ່ຄວາມເຊື່ອ
11. ຜູ້ນຳ – ສອງໜ້າທີ່ຍິ້ມ

ໜ່ວຍຂອງທ່ານຍັງຂາດຫຍັງທີ່ຈະເຮັດໃຫ້ເຕີບໃຫຍ່ຂຶ້ນເປັນຄຣິສຕະຈັກທີ່ເຂັ້ມແຂງບໍ?

ເລົ່າເລື່ອງຂອງທ່ານແລະເລື່ອງຂອງພຣະເຢຊູເຈົ້າກັບ 5 ຄົນໃນອາທິດນີ້ ຂໍໃຫ້ຝຶກແບບນີ້ທຸກໆອາທິດ

---

## ຢູ່ໃສຕໍ່ໄປ?

ອ່ານປຶ້ມກ່ຽວກັບໜ່ວຍສ້າງສາວົກເລື່ອງການຄົ້ນພົບ ຫຼືສ້າງຄວາມເຂັ້ມແຂງ ຫຼືເລືອກພຣະຄຳເຫຼັ້ມໜຶ່ງເຊັ່ນໂຢຮັນຫຼືມາຣະໂກ (ເລືອກຫົວຂໍ້ດຽວສຳລັບການເຂົ້າໜ່ວຍແຕ່ລະຄັ້ງ)

---

## ການຄົ້ນພົບ

(ສຳລັບໜ່ວຍທີ່ຈຳເປັນຕ້ອງຮູ້ຈັກຫຼືລຶ້ງເຄີຍກັບພຣະຄຳພີ)

ໃຊ້ພຣະຄຳຕໍ່ໄປນີ້ໃນການ "ເບິ່ງຂຶ້ນເທິງ" ພຣະຄຳບາງຕອນອາດຈະໃຊ້ເວລາສຶກສາຮ່ວມກັນຫຼາຍກວ່າໜຶ່ງຄັ້ງ

---

**ຄົ້ນພົບພຣະເຈົ້າ** - ພຣະເຈົ້າແມ່ນໃຜແລະພຣະອົງເປັນແນວໃດ?

1. ການສ້າງ - ປະຖົມມະການ 1
2. ການສ້າງມະນຸດ - ປະຖົມມະການ 2
3. ມະນຸດບໍ່ເຊື່ອຟັງພຣະເຈົ້າ - ປະຖົມມະການ 3
4. ໂນອາແລະນໍ້າຖ້ວມໂລກ - ປະຖົມມະການ 6:5-8:14
5. ຄຳສັນຍາທີ່ພຣະເຈົ້າໄດ້ໃຫ້ກັບໂນອາ - ປະຖົມມະການ 8:15-9:17
6. ພຣະເຈົ້າກ່າວກັບອັບຣາຮາມ - ປະຖົມມະການ 12:1-7; 15:1-6
7. ດາວິດກາຍເປັນກະສັດຂອງເຊື້ອສາຍຂອງອັບຣາຮາມ - 1 ຊາມູເອນ 16:1-13; 2 ຊາມູເອນ 7:1-28
8. ດາວິດແລະນາງບັດເຊບາ - 2 ຊາມູເອນ 11:1-27
9. ເລື່ອງລາວຂອງນາທານ - 2 ຊາມູເອນ 12:1-25
10. ພຣະເຈົ້າສັນຍາວ່າພຣະຜູ້ຊ່ອຍໃຫ້ພົ້ນຈະມາ - ເອຊາຢາ 53

**ຄົ້ນພົບພຣະເຢຊູເຈົ້າ** - ພຣະເຢຊູເຈົ້າເປັນໃຜແລະເປັນຫຍັງພຣະອົງຈຶ່ງສະເດັດມາ?

1. ພຣະຜູ້ຊ່ອຍໃຫ້ພົ້ນໄດ້ຊົງບັງເກີດມາ - ມັດທາຍ 1:18-25
2. ພຣະເຢຊູເຈົ້າຮັບບັບຕິສະມາ - ມັດທາຍ 3:7-9, 13-15
3. ຄົນທີ່ຖືກຜີເຂົ້າໄດ້ຮັບການປິ່ນປົວ - ມາຣະໂກ 5:1-20
4. ພຣະເຢຊູເຈົ້າບໍ່ໄດ້ປ່ອຍໃຫ້ແກະຫຼົງຫາຍ - ໂຢຮັນ 10:1-30
5. ພຣະເຢຊູເຈົ້າຮັກສາຄົນຕາບອດ - ລູກາ 18:31-42
6. ພຣະເຢຊູເຈົ້າກັບຊັກຂ່າຍ - ລູກາ 19:1-9
7. ພຣະເຢຊູເຈົ້າແລະມັດທາຍ - ມັດທາຍ 9:9-13
8. ພຣະເຢຊູເຈົ້າເປັນທາງດຽວ - ໂຢຮັນ 14:1-15
9. ການມາຂອງພຣະວິນຍານບໍລິສຸດເຈົ້າ - ໂຢຮັນ 16:5-15
10. ອາຫານຄາບສຸດທ້າຍ - ລູກາ 22:14-20
11. ການຈັບແລະການສອບສວນ - ລູກາ 22:47-53, 23:13-24
12. ການຄຶງກາງແຂນ - ລູກາ 23:33-56
13. ພຣະເຢຊູເຈົ້າຊົງພຣະຊົນຢູ່ - ລູກາ 24:1-7, 36-4; ກິດຈະການ1:1-11
14. ຄວາມເຊື່ອແລະການກະທຳ - ຟີລິບປອຍ 3:3-9

---

## ເສີມສ້າງຄວາມເຂັ້ມແຂງ

(ສຳລັບຜູ້ທີ່ເຊື່ອໃໝ່ ຫຼືໜ່ວຍທີ່ຕ້ອງການສຸມໃສ່ການເປັນສາວົກ)

**ພຣະເຢຊູເຈົ້າໄດ້ກ່າວວ່າ** - ຮຽນຮູ້ການເຊື່ອຟັງຄຳສັ່ງຂອງພຣະເຢຊູເຈົ້າສືບຕໍ່ເລົ່າເລື່ອງຂອງພຣະເຢຊູເຈົ້າໃຫ້ຄົນໃນບັນຊີລາຍຊື່ຂອງທ່ານ

1.1 ເຊື່ອແລະປະຕິບັດຕາມ - ໂຢຮັນ 14:15-21
1.2 ການກັບໃຈ ເຊື່ອ ຕິດຕາມ - ມາຣະໂກ 1:14-17; ເອເຟໂຊ 2:1-10
1.3 ບັບຕິສະມາ - ມັດທາຍ 28:19; ກິດຈະການ 8:26-38
1.4 ຮັກພຣະເຈົ້າ ຮັກຄົນອື່ນ - ລູກາ 10:25-37

**ພຣະເຢຊູເຈົ້າຍັງກ່າວໄວ້ອີກວ່າ** - ຮຽນຮູ້ການເຊື່ອຟັງຄຳສັ່ງຂອງພຣະເຢຊູເຈົ້າເລົ່າເລື່ອງຂອງພຣະເຢຊູເຈົ້າໃຫ້ຄົນໃນບັນຊີລາຍຊື່ຂອງທ່ານຕໍ່ໄປ

---

2.1 ເວົ້າລົມກັບພຣະເຈົ້າ - ມັດທາຍ6:9-13 ຮຽນຮູ້ແລະຝຶກຝົນອະທິຖານຕາມແບບຂອງພຣະເຢຊູເຈົ້າ
2.2 ລະນຶກເຖິງພຣະເຢຊູເຈົ້າ - ລູກາ 22:14-20; 1ໂກຣິນໂທ 11:23-32
2.3 ຖວາຍ - ກິດຈະການ 4:32-37
2.4 ສົ່ງຕໍ່ - ມັດທາຍ 28:18-20

---

**ຕິດຕາມຄືກັບຂ້າພຣະເຈົ້າປະຕິບັດຕາມ** – ສ້າງສາວົກ ຖ່າຍທອດສິ່ງທີ່ທ່ານຮຽນຮູ້ໃຫ້ແກ່ຄົນອື່ນ ສອນໃຫ້ພວກເຂົາໃຫ້ສົ່ງຕໍ່ໄປ

3.1 ຊອກຫາສາວົກຈັກຄົນໜຶ່ງ - 2 ຕີໂມທຽວ 1:1-14
3.2 ຖ່າຍທອດສິ່ງທີ່ໄດ້ຮັບ - 2 ຕີໂມທຽວ 2:1-4,14-16
3.3 ສອນໃຫ້ລາວສອນຄົນອື່ນ - 2 ຕີໂມທຽວ 3:1-17
3.4 ຊ່ວງເວລາຂອງຄວາມຍາກລໍາບາກ - 2 ຕີໂມທຽວ 4:1-22

---

**ເພີ່ມທະວີຈໍານວນໜ່ວຍສ້າງສາວົກ** - ຮວບຮວມສາວົກຂອງທ່ານແລ້ວຕັ້ງໜ່ວຍໃໝ່

4.1 ເລີ່ມຕົ້ນແລະວາງແຜນ - ລູກາ 10:1-11 ຟັງການຊີ້ນໍາຂອງພຣະເຢຊູເຈົ້າໃນການສ້າງໜ່ວຍໃໝ່
4.2 ເຂົ້າໜ່ວຍ - ກິດຈະການ 2:14-47
4.3 ບຸກຄົນແຫ່ງສັນຕິສຸກ - ມາຣະໂກ 5:1-20, 6:53-56 ຊອກຫາຜູ້ທີ່ເຕັມໃຈທີ່ຈະເລົ່າເລື່ອງຂອງພຣະເຢຊູເຈົ້າ ເລີ່ມຕົ້ນຕັ້ງໜ່ວຍໂດຍຄົນຜູ້ນັ້ນກັບໝູ່ເພື່ອນແລະຄອບຄົວຂອງລາວ
4.4 ຄົນທີ່ກຽມພ້ອມ - ມັດທາຍ 13:1-9, 18-23

---

**ນໍາ** - ຮຽນຮູ້ວິທີນໍາໜ່ວຍສ້າງສາວົກ

5.1 ເຮັດໃຫ້ເບິ່ງ (ຈົ່ງນໍາແບບນີ້) - ໂຢຮັນ 13:1-17
5.2 ເຮັດໃຫ້ເບິ່ງ (ຢ່ານໍາແບບນີ້) - 3 ໂຢຮັນ 5-14
5.3 ຊ່ວຍເຫຼືອ - ມາຣະໂກ 4:35-41
5.4 ເຝົ້າເບິ່ງ - ລູກາ 10:1-11, 17, 20
5.5 ປ່ອຍ - ມັດທາຍ 25:14-30

**ອອກໄປ: ສູ່ຊຸມຊົນ** - ຮຽນຮູ້ວິທີການເຂົ້າຫາຊຸມຊົນຂອງທ່ານ

6.1 ອອກໄປ : ໃນຊຸມຊົນ - ກິດຈະການ 1:1-8
6.2 ການຊ່ວຍເຫຼືອຄົນທຸກຍາກເລົ່າຂ່າວປະເສີດ - ລູກາ 7:11-23
6.3 ໄປບ່ອນທີ່ພຣະເຈົ້າສົ່ງໄປ - ກິດຈະການ 10:9-48
6.4 ອອກໄປຢ່າງມີແຜນການ - ກິດຈະການ 13:1-3, 32-33, 38-39; 4:21-23, 26-27

---

**ອອກໄປ: ສູ່ໂລກ** – ຮຽນຮູ້ທີ່ຈະອອກໄປປະກາດຈົນສຸດປາຍແຜ່ນດິນໂລກ

7.1 ອອກໄປທົ່ວໂລກ - ກິດຈະການ 1:1-8; ມັດທາຍ 28:19-20
7.2 ອອກໄປບ່ອນທີ່ພຣະເຈົ້າສົ່ງໄປ - ກິດຈະການ 8:26-38
7.3 ພຣະເຈົ້າຮັກຄົນທຸກຊາດ - ໂຢຮັນ 4:4-30, 39-41
7.4 ອອກໄປພ້ອມແຜນການ - ກິດຈະການ 13:1-3, 32-33, 38-39; 14:21-23, 26-27

---

**ຈື່ຈໍາຂໍ້ມູນການພື້ນຖານ**: ຮຽນຮູ້ວ່າທ່ານຈະເຮັດແນວໃດໃນເວລາທີ່ທ່ານເຂົ້າ**ໜ່ວຍ**

8.1 ພຣະເຢຊູເຈົ້າຊົງສໍາຄັນທີ່ສຸດ - ຟີລິບປອຍ 2:1-11
8.2 ເວົ້າກັບພຣະເຈົ້າ - ມັດທາຍ 6:9-13
8.3 ຊຸມຊົນ - ເຮັບເຣີ 10:23-25
8.4 ພຣະຄໍາພີ - 2 ຕີໂມທຽວ 3:10-17

---

ຕັ້ງໝັ້ນຄົງ – ຮຽນຮູ້ທີ່ຈະຮັກສາຄວາມເຂັ້ມແຂງແລະຕິດຕາມພຣະເຢຊູເຈົ້າ

9.1 ການບໍ່ເຊື່ອຟັງ - ໂຢນາ 1
9.2 ຕັ້ງໝັ້ນຄົງ - ໂຢນາ 2
9.3 ການເຊື່ອຟັງ - ໂຢນາ 3
9.4 ການເຊື່ອຟັງຈົນເຖິງທີ່ສຸດ - ໂຢນາ 4
9.5 ໃຊ້ມັນຫຼືສູນເສຍມັນໄປ - ມັດທາຍ 25:14-30

**ບ່ອນໃດຕໍ່ໄປ?**
ເລືອກຂໍ້ຄວາມຈາກພຣະຄໍາພີແລະເຂົ້າຮ່ວມໜ່ວຍເລື້ອຍໆ ໃຊ້ຄໍາຖາມແລະຮູບແບບການສ້າງໜ່ວຍແບບເດີມ ຢ່າຢຸດການປະຊຸມ

ເພີ່ມທະວີຈຳນວນສາວົກ